ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ
PETROLEUM TRADING LAO PUBLIC COMPANY
ຖະໜົນ: ກຳແພງເມືອງ, ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສ ປ ປ ລາວ ໂທ: 856 21 264834-5 ແຟັກ: 856021 264836
Kampheangmueng Rd, Phonthan Village, Xaysettha District, Vientiane Capital, Lao P.D.R, Tel: 856 21 264834-5, Fax: 856021 264836

ເລກທີ :0022 /ປທລ/2020
ນະຄອນຫຼວງວຽງຈັນ, ວັນທີ: 03 APR 2020

ໜັງສືແຈ້ງເຊີນ

ຮຽນ: ທ່ານ ຜູ້ຖືຮຸ້ນ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ທີ່ນັບຖື.
ເລື່ອງ: ເຊີນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019.

- ອີງຕາມ ກົດລະບຽບ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ສະບັບ ລົງວັນທີ 13 ຕຸລາ 2014;
- ອີງຕາມມະຕິກອງປະຊຸມສະພາບໍລິຫານ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ຄັ້ງທີ 1/2020 ວັນທີ 13 ມີນາ 2020;
- ອີງຕາມມະຕິກອງປະຊຸມສະພາບໍລິຫານ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ຄັ້ງທີ 2/2020 ວັນທີ 27 ມີນາ 2020.

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ("ບໍລິສັດ" ຫຼື "ປທລ") ຂໍຖືເປັນກຽດຮຽນເຊີນທ່ານ ຜູ້ຖືຮຸ້ນຂອງ ບໍລິສັດ ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019 ທີ່ຈະໄດ້ຈັດຂຶ້ນໃນວັນທີ 29 ເມສາ 2020, ເວລາ 09:30 ໂມງ (ເລີ່ມລົງທະບຽນເວລາ 08:30 ໂມງ), ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 8, ອາຄານຕະຫຼາດຫຼັກຊັບລາວ, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ ເພື່ອພິຈາລະນາ ແລະ ຮັບຮອງເອົາບັນຫາຕ່າງໆ ຕາມວາລະກອງປະຊຸມທີ່ຄັດຕິດມາພ້ອມນີ້.

ບໍລິສັດໄດ້ແຈ້ງວັນ, ເວລາ ແລະ ວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019 ຜ່ານເວັບໄຊຂອງຕະຫຼາດຫຼັກຊັບລາວ (www.lsx.com.la).

ຫວັງຢ່າງຍິ່ງວ່າ ທ່ານຄົງຈະສະລະເວລາອັນມີຄ່າຂອງທ່ານເຂົ້າຮ່ວມປະຊຸມກັບພວກເຮົາໃນຄັ້ງນີ້ດ້ວຍ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ
ຮອງປະທານສະພາບໍລິຫານ

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ Petroleum Trading Lao Public Company

ຈັນທະດອນ ເມກສະຫວັນ
Chanthadom MEKSAVANH

ເອກະສານຄັດຕິດ

1. ວາລະກອງປະຊຸມສາມັນ ຜູ້ຖືຮຸ້ນ ປະຈຳປີ 2019 (ເອກະສານຄັດຕິດ 1) ;
2. ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2018 (ເອກະສານຄັດຕິດ 2);
3. ເອກະສານລາຍງານການເງິນ ປະຈຳປີ 2019 (ເອກະສານຄັດຕິດ 3);
4. ຊີວະປະຫວັດຫຍໍ້ຂອງສະພາບໍລິຫານອິດສະຫຼະ (ເອກະສານຄັດຕິດ 4);
5. ໃບມອບສັນທະ (ເອກະສານຄັດຕິດ 5);
6. ຄຳແນະນຳກ່ຽວກັບເອກະສານ ແລະ ຫຼັກຖານທີ່ຕ້ອງນຳມາສະເໜີເພື່ອເຂົ້າຮ່ວມປະຊຸມ (ເອກະສານຄັດຕິດ 6);
7. ແຜນທີ່ສະຖານທີ່ຈັດປະຊຸມ (ເອກະສານຄັດຕິດ 7).

ໝາຍເຫດ

1. ຜູ້ຖືຮຸ້ນທຸກທ່ານ ຕ້ອງໄປຮັບເອົາໜັງສືເຊີນປະຊຸມພ້ອມເອກະສານຄັດຕິດຕ່າງໆ ເລີ່ມຕັ້ງແຕ່ 06 ເມສາ 2020, ຢູ່ອາຄານຕະຫຼາດຫຼັກຊັບລາວ ຊັ້ນ 4 ພະແນກ ຊຳລະສະສາງ ແລະ ຮັບຝາກຫຼັກຊັບ, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ໂທລະສັບ: (856-21) 454361-4;
2. ສຳລັບຜູ້ຖືຮຸ້ນທີ່ຈະເຂົ້າຮ່ວມປະຊຸມດ້ວຍຕົນເອງກະລຸນານຳບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນຄົນຕ່າງປະເທດ) ມາໃນວັນປະຊຸມ ເພື່ອສະເໜີໂຕເຂົ້າຮ່ວມກອງປະຊຸມ;
3. ສຳລັບຜູ້ຖືຮຸ້ນທີ່ຈະໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງ ກະລຸນາປະກອບຂໍ້ມູນ ແລະ ລົງລາຍເຊັນໃນໃບມອບສັນທະ ຕາມ (ເອກະສານຄັດຕິດ 5) ທີ່ຄັດຕິດມາພ້ອມນີ້ໃຫ້ຖືກຕ້ອງຄົບຖ້ວນ.
4. ສຳລັບຜູ້ຕາງໜ້າທີ່ຈະເຂົ້າຮ່ວມປະຊຸມຈະຕ້ອງນຳເອກະສານ ຫຼື ຫຼັກຖານ ເພື່ອສະເໜີໂຕເຂົ້າຮ່ວມກອງປະຊຸມ ຕາມລາຍລະອຽດທີ່ໄດ້ລະບຸໄວ້ໃນ (ເອກະສານຄັດຕິດ 6) ທີ່ໄດ້ຄັດຕິດມາພ້ອມ ແລະ ສົ່ງມອບໃຫ້ປະທານກອງປະຊຸມ ແລະ/ຫຼື ຜູ້ທີ່ໄດ້ຮັບມອບໝາຍຈາກປະທານ, ຜູ້ຕາງໜ້າຈຶ່ງເຂົ້າຮ່ວມກອງປະຊຸມໄດ້;
5. ໃນກໍລະນີທີ່ຜູ້ຖືຮຸ້ນຈະມອບໝາຍໃຫ້ຜູ້ອຳນວຍການຂອງບໍລິສັດ ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ແລະ ລົງລາຍເຊັນໃນໃບມອບສັນທະ ແລະ ໝາຍ (✓) ໃນ ☐ ເພື່ອເລືອກເອົາຜູ້ອຳນວຍການຂອງບໍລິສັດ ທ່ານໃດທ່ານໜຶ່ງເປັນຜູ້ຕາງໜ້າ ແລະ ສົ່ງໃບມອບສັນທະດັ່ງກ່າວພ້ອມເອກະສານປະກອບ ສົ່ງເຖິງ ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ, ເລຂານຸການຂອງບໍລິສັດ ທ່ານ ຄຳພຸດ ສົມບູນ ສຳນັກງານຕັ້ງຢູ່ ຖະໜົນ ກຳແພງເມືອງ, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ ແລະ ກະລຸນາສົ່ງເຖິງບໍລິສັດກ່ອນ 3 ວັນ ກ່ອນມື້ປະຊຸມ;
6. ຖ້າຫາກທ່ານໃດມີຂໍ້ສົງໄສ ແລະ ຄຳຖາມກ່ຽວກັບໃບມອບສັນທະ ລວມທັງລາຍລະອຽດໃນໜັງສືເຊີນປະຊຸມສະບັບນີ້ ທ່ານສາມາດສອບຖາມ ທ່ານ ຄຳພຸດ ສົມບູນ ເບີໂທ 021 264 834-5.

ເອກະສານຄັດຕິດ 1

ວາລະທີ 01: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2018

ລາຍລະອຽດ: ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018 ໄດ້ຈັດຂຶ້ນໃນວັນທີ 26 ເມສາ 2019 ໂດຍກອງປະຊຸມໄດ້ພິຈາລະນາກິດຈະກຳຕ່າງໆ ເຊິ່ງກອງປະຊຸມດັ່ງກ່າວໄດ້ເຮັດບົດບັນທຶກຕາມເນື້ອໃນຂອງກອງປະຊຸມຢ່າງຖືກຕ້ອງ ໂດຍມີລາຍລະອຽດຂອງບົດບັນທຶກກອງປະຊຸມຕາມ **(ເອກະສານຄັດຕິດ 2).**

ຄຳເຫັນຂອງສະພາບໍລິຫານ: ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາຮັບຮອງເອົາວາລະນີ້.

ຄະແນນສຽງທີ່ຕ້ອງໃຊ້: ອີງຕາມກົດໝາຍວ່າດ້ວຍ ວິສາຫະກິດ ທີ່ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິກອງປະຊຸມດ້ວຍຄະແນນສຽງຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 02: ພິຈາລະນາ ແລະ ຮັບຮອງ ບົດລາຍງານຜົນການດຳເນີນທຸລະກິດ ປະຈຳປີ 2019 ແລະ ເອກະສານລາຍງານການເງິນທີ່ຜ່ານການກວດສອບຂອງຜູ້ກວດສອບພາຍນອກ ປະຈຳປີ 2019

ລາຍລະອຽດ: ຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2019 ມີດັ່ງນີ້:
ຍອດຂາຍລວມຂອງ 2019 ປະຕິບັດໄດ້: 84,28% ຂອງແຜນປີ.

ລ/ດ	ປະເພດຢ້ຳ	ຍອດຂາຍ 2019 (ລິດ)	ແຜນປີ 2019 (ລິດ)	ສ່ວນຕ່າງ (ລິດ)
1	ພລາຕິນຳ PLT	14.518.000	15.159.200	(641.200)
2	ໂກລ GLD	24.036.000	24.730.200	(694.200)
3	ມາດຕະຖານ STD	17.747.000	27.543.220	(9.796.220)
4	ທ້ອງຖິ່ນພັດທະນາ THN	10.675.000	12.095.960	(1.420.960)
ລວມ		**66.976.000**	**79.528.580**	**(12.552.580)**

ລ/ດ	ລູກຄ້າໂຄງການ	ຍອດຂາຍ 2019 (ລິດ)	ແຜນປີ 2019 (ລິດ)	ສ່ວນຕ່າງ (ລິດ)
1	Other-B2B	8.867.000	12.270.000	(3.403.000)
2	Phubia mining	48.480.000	50.385.000	(1.905.000)
3	SINOHYDRO	9.669.000	12.373.000	(2.704.000)
4	Yunnan	35.341.000	46.228.000	(10.887.000)
ລວມ		**102.357.000**	**121.256.000**	**(18.899.000)**

ລ/ດ	ສິນຄ້າ	ຍອດຂາຍ 2019 (ລິດ)	ແຜນປີ 2019 (ລິດ)	ສ່ວນຕ່າງ (ລິດ)
1	ນ້ຳມັນເຄື່ອງ	10.335	155.000	(144.665)

ຍອດຂາຍລວມ 2019 (ລິດ)	ແຜນປີ 2019 (ລິດ)	ສ່ວນຕ່າງ (ລິດ)	ຄິດເປັນ
169.343.335	200.939.580	(31.596.245)	**84,28%**

ລາຍລະອຽດຮ່າງເອກະສານລາຍງານການເງິນ ປະຈຳປີ 2019 ຕາມ **(ເອກະສານຄັດຕິດ 3).**

<u>ຄຳເຫັນຂອງສະພາບໍລິຫານ</u>: ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາຮັບຮອງວາລະນີ້.

ຄະແນນສຽງທີ່ຕ້ອງໃຊ້: ອີງຕາມກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

<u>ວາລະທີ 03: ພິຈາລະນາບໍ່ໃຫ້ມີການປັນຜົນ ຈາກຜົນການດຳເນີນທຸລະກິດ ປະຈຳປີ 2019</u>

<u>ລາຍລະອຽດ:</u> ອີງຕາມເອກະສານລາຍງານການເງິນທີ່ຜ່ານການກວດສອບພາຍນອກ ປະຈຳປີ 2019 ບໍລິສັດຂາດທຶນໃນການດຳເນີນທຸລະກິດ ແລະ ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 46/ສພຊ ລົງວັນທີ 26 ທັນວາ 2013 ມາດຕາ 155 “ການຈ່າຍເງິນປັນຜົນ” ຫ້າມບໍ່ໃຫ້ບໍລິສັດຈ່າຍເງິນປັນຜົນ ເມື່ອບໍລິສັດຍັງມີຂາດທຶນຢ່າງຕໍ່ເນື່ອງໃນຊຸມປີຜ່ານມາ.

<u>ຄຳເຫັນຂອງສະພາບໍລິຫານ</u>: ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາຮັບຮອງວາລະນີ້.


ຄະແນນສຽງທີ່ຕ້ອງໃຊ້: ອີງຕາມກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

<u>ວາລະທີ 04: ພິຈາລະນາ ແລະ ຮັບຮອງເອົາ ແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2020</u>

<u>ລາຍລະອຽດ:</u> ແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2020 ມີດັ່ງນີ້:

ພາຍຫຼັງທີ່ ປທລ ໄດ້ສ້າງຕັ້ງ 2 ບໍລິສັດລູກ (ນຳເຂົ້າ/ສົ່ງອອກ ແລະ ຈັດຈຳໜ່າຍ) ການດຳເນີນການສ່ວນຫຼາຍບໍ່ໄດ້ເປັນຂອງ ປທລ. ເພື່ອເປັນການລວມສູນພາຍໃຕ້ ປທລ ຈຶ່ງສ້າງ Shared Service Centers (SSC). ເຊິ່ງວັດຖຸປະສົງ ແລະ ປະໂຫຍດຂອງສູນຄື:

- ເພື່ອຄວາມຄ່ອງຕົວ ແລະ ລວມສູນ;
- ເພື່ອສ້າງລາຍໄດ້ເພີ່ມໃຫ້ ປທລ;
- ເພື່ອໃຫ້ມີການຄວບຄຸມທີ່ດີຂຶ້ນ ແລະ ມີຄວາມໂປ່ງໃສກ່ຽວກັບຄ່າໃຊ້ຈ່າຍຂອງບໍລິສັດໃນເຄືອທັງໝົດ;
- ເພື່ອໃຫ້ບໍລິການເປັນມາດຕະຖານດຽວກັນ ແລະ ເປັນມືອາຊີບໃຫ້ກັບບໍລິສັດໃນເຄືອທັງໝົດ.



ລາຍໄດ້ທັງໝົດຈາກ SSC: 471.000 ໂດລາສະຫະລັດ (ຫຼື 4.000 ລ້ານກີບ).

- ພະແນກຫ້ອງການ ຄ່າເຊົ່າຕຶກ: 300.000 ໂດລາສະຫະລັດ;
- ລາຍຮັບຈາກການໃຫ້ບໍລິການໄອທີຜ່ານການດຳເນີນງານຂອງກຸ່ມ ປທລ: 110.000 ໂດລາສະຫະລັດ;
- ກິດໝາຍ: 40.000 ໂດລາສະຫະລັດ;
- ການຈັດຊື້: 21.000 ໂດລາສະຫະລັດ

<u>ຄຳເຫັນຂອງສະພາບໍລິຫານ</u>: ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາຮັບຮອງວາລະນີ້.

ຄະແນນສຽງທີ່ຕ້ອງໃຊ້: ອີງຕາມກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

<u>ວາລະທີ 05: ພິຈາລະນາ ແລະ ຮັບຮອງ ການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກຄື ບໍລິສັດ Price Waterhouse Coopers (Lao) Sole Co., Ltd. (“PWC”) ພ້ອມທັງກຳນົດຄ່າຈ້າງ ປະຈຳປີ 2020 ຢູ່ລະຫວ່າງ 34,000-37,000 ໂດລາສະຫາລັດ</u>

<u>ລາຍລະອຽດ:</u> ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 46/ສພຊ ລົງວັນທີ 26 ທັນວາ 2013 ມາດຕາ 154 ສິດ ແລະ ໜ້າທີ່ຂອງກອງປະຊຸມສາມັນຜູ້ຖືຮຸ້ນ ກຳນົດໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນເປັນຜູ້ເລືອກຕັ້ງຜູ້ກວດສອບບັນຊີ ແລະ ຄ່າຈ້າງຂອງຜູ້ກວດສອບບັນຊີ ໂດຍສະພາບໍລິຫານໄດ້ພິຈາລະນາເຫັນຄວນໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາແຕ່ງຕັ້ງ PWC ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດ ປະຈຳປີ 2020 ໂດຍກຳນົດຄ່າຈ້າງຢູ່ລະຫວ່າງ 34.000 – 37.000 ໂດລາສະຫາລັດ, PWC ເປັນ 1ໃນ 4 ບໍລິສັດກວດສອບບັນຊີພາຍນອກທີ່ໄດ້ຮັບອະນຸຍາດຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ. ປທລ ໄດ້ໃຊ້ບໍລິການ PWC ເປັນຜູ້ກວດສອບພາຍນອກແຕ່ປີ 2017 ຫາ 2019 ເຫັນວ່າ PWC ມີປະສົບການ, ມີຄວາມລະອຽດຮອບຄອບໃນການທົບທວນ. ຊຶ່ງລາຍລະອຽດຄ່າຈ້າງແຕ່ລະປີມີດັ່ງລຸ່ມນີ້:

ປີ	ຜູ້ກວດສອບບັນຊີພາຍນອກ	ມູນຄ່າການກວດສອບ (ໂດລາສະຫາລັດ)
2017	PWC	55.000
2018	PWC	55.000
2019	PWC	34.000
2020	PWC	34.000 – 37.000

<u>ຄຳເຫັນຂອງສະພາບໍລິຫານ</u>: ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາຮັບຮອງວາລະນີ້.

ຄະແນນສຽງທີ່ຕ້ອງໃຊ້: ອີງຕາມກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງ ຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

<u>ເອກະສານຄັດຕິດ 2</u>

ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2018

ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ
PETROLEUM TRADING LAO PUBLIC COMPANY
PetroTrade
ຖະໜົນ: ກຳແພງເມືອງ, ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສ ປ ປ ລາວ ໂທ: 856 21 264834-5 ແຟັກ: 856021 264836
Kampheangmueng Rd, Phonthan Village, Xaysettha District, Vientiane Capital, Lao P.D.R, Tel: 856 21 264834-5, Fax: 856021 264836

ເລກທີ: 0046 /ປທລ/2019

ນະຄອນຫຼວງວຽງຈັນ, ວັນທີ: 10 MAY 2019

ບົດບັນທຶກ ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018
ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (ປທລ) ໄດ້ຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018 ເມື່ອ ວັນທີ 26 ເມສາ 2019 ເວລາ 09:30 ໂມງ ທີ່ອາຄານຕະຫຼາດຫຼັກຊັບລາວ, ຫ້ອງປະຊຸມໃຫຍ່ຊັ້ນ 8, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ. ໂດຍມີຜູ້ຖືຮຸ້ນເຂົ້າຮ່ວມປະຊຸມທັງໝົດ 24 ທ່ານ, ຖືຮຸ້ນ ລວມ 198,511,521 ຮຸ້ນ, ຄິດເປັນ 84.47% ຂອງຈຳນວນຮຸ້ນທັງໝົດທີ່ຈຳໜ່າຍແລ້ວຂອງບໍລິສັດ ຖືວ່າຄົບອົງປະຊຸມຕາມກົດໝາຍ ແລະ ລະບຽບການຂອງບໍລິສັດ.

ພິທີກອນດຳເນີນກອງປະຊຸມ ໄດ້ແນະນຳສະມາຊິກສະພາບໍລິຫານການແຕ່ລະທ່ານ ແລະ ເຈົ້າໜ້າທີ່ ກ່ຽວຂ້ອງທີ່ໄດ້ເຂົ້າຮ່ວມກອງປະຊຸມດັ່ງນີ້:

ສະມະຊິກສະພາບໍລິຫານ	**ຕຳແໜ່ງ**
1. ທ່ານ ນາງ ຈັນທະດອນ ເມກສະຫວັນ	:ຮອງປະທານສະພາບໍລິຫານ;
2. ທ່ານ ນາງ ດາລີ ພົນເສນາ	: ປະທານຄະນະກຳມະການກວດສອບຄວາມສ່ຽງພາຍໃນ / ສະມາຊິກ ສະພາບໍລິຫານອິດສະລະ;
3. ທ່ານ ໜູພັນ ມະຫາວົງ	: ຄະນະກຳມະການກວດສອບຄວາມສ່ຽງພາຍໃນ / ສະມາຊິກສະພາ ບໍລິຫານອິດສະລະ;
4. ທ່ານ ໂພໄຊ ຈັນທະວົງສາ	:ປະທານຄະນະກຳມະການກວດສອບພາຍໃນ / ສະມາຊິກສະພາ ບໍລິຫານອິດສະລະ; ແລະ
5. ທ່ານ ບຸນຖຸ້ນ ຈິດຕະວົງ	: ສະມາຊິກສະພາບໍລິຫານ.

ສ່ວນ ທ່ານ ຈັນທອນ ສິດທິໄຊ ປະທານສະພາບໍລິຫານ / ວ່າການຜູ້ອຳນວຍການໃຫຍ່ ແລະ ທ່ານ ນາງ ສະຫວັນທອງ ພົງສະຫວັນ ຮອງປະທານສະພາບໍລິຫານ ຕິດພາລະກິດທີ່ຕ່າງປະເທດຈຶ່ງບໍ່ສາມາດເຂົ້າຮ່ວມກອງປະຊຸມ

ໃນຄັ້ງນີ້ໄດ້ ແລະ ໄດ້ແຕ່ງຕັ້ງ ທ່ານ ໂພໄຊ ຈັນທະວົງສາ ປະທານຄະນະກຳມະການກວດສອບພາຍໃນ / ສະມາຊິກສະພາ ບໍລິຫານອິດສະລະ ເປັນປະທານກອງປະຊຸມໃນຄັ້ງນີ້ແທນ.

ໃນກອງປະຊຸມມື້ນີ້, ຍັງມີທ່ານຜູ້ເຂົ້າຮ່ວມຕາງໜ້າຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ), ຕະຫຼາດຫຼັກຊັບລາວ (ຕລຊລ), ບໍລິສັດ ພຣາຍສ໌ວໍເຕີ້ເຮົ້າສ໌ກຸເປີ້ສ໌ (ລາວ) ຈຳກັດ (PWC), ບໍລິສັດ ຫຼັກຊັບ ລ້ານຊ້າງ ມະຫາຊົນ, ຄະນະກວດກາກອງປະຊຸມຜູ້ຖືຮຸ້ນ ແລະ ລົງຄະແນນສຽງ, ຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມຜູ້ຖືຮຸ້ນ ແລະ ຜູ້ຖືຮຸ້ນລາຍຍ່ອຍ.

ພິທີກອນໄດ້ແຈ້ງໃຫ້ບັນດາທ່ານຜູ້ຖືຮຸ້ນຮັບຊາບເຖິງວາລະການປະຊຸມໃນມື້ນີ້ ພ້ອມດ້ວຍວິທີການລົງຄະແນນ ແລະ ການນັບຜົນຄະແນນໃຫ້ທຸກທ່ານຮັບຊາບດັ່ງນີ້:

ວາລະການປະຊຸມ:

ວາລະທີ 1: ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມຜູ້ຖືຮຸ້ນ ປະຈຳປີຜ່ານມາ ເພື່ອຊາບ;

ວາລະທີ 2: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ I ປະຈຳປີ 2018;

ວາລະທີ 3: ລາຍງານຕົວເລກຊັບສິນຂອງ ປທລ ທີ່ໂອນໃຫ້ 2 ບໍລິສັດລູກ ພ້ອມທັງ ພິຈາລະນາ ແລະ ຮັບຮອງ ໂຄງສ້າງ, ການບໍລິຫານ ແລະ ສັດສ່ວນການຖືຄອງຮຸ້ນຂອງ 2 ບໍລິສັດລູກ ຄື: (1) ບໍລິສັດ ປີໂຕຣ ເທຣດ ພຸ່ມ່າ ເອເນີຈີ ນ້ຳເຂົ້າ - ສົ່ງອອກ ຈຳກັດ (2) ບໍລິສັດ ປີໂຕຣເທຣດ ພຸ່ມ່າ ເອເນີຈີ ດິສທະບິວຊັ່ນ ຈຳກັດ. ວາລະນີ້ແມ່ນການແຈ້ງໃຫ້ຜູ້ຖືຮຸ້ນລາຍຍ່ອຍໄດ້ຮັບຊາບ ເພາະໄດ້ຮັບຮອງໃນກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 1/2018 ຄັ້ງວັນທີ 1 ມິຖຸນາ 2018;

ວາລະທີ 4: ພິຈາລະນາ ແລະ ຮັບຮອງ ເອກະສານລາຍງານການເງິນທີ່ຜ່ານການກວດສອບຂອງ ຜູ້ກວດສອບພາຍນອກ ປະຈຳປີ 2018 ແລະ ບົດລາຍງານຜົນການດຳເນີນທຸລະກິດ ປະຈຳປີ 2018;

ວາລະທີ 5: ພິຈາລະນາ ແລະ ຮັບຮອງ ບໍ່ໃຫ້ມີການປັນຜົນ ຈາກຜົນການດຳເນີນທຸລະກິດປະຈຳປີ 2018 ອັນເນື່ອງມາຈາກບໍລິສັດ ຂາດທຶນໃນການດຳເນີນທຸລະກິດ;

ວາລະທີ 6: ພິຈາລະນາ ແລະ ຮັບຮອງ ແຜນການດຳເນີນທຸລະກິດຂອງ ບໍລິສັດ ປະຈຳປີ 2019;

ວາລະທີ 7: ພິຈາລະນາ ແລະ ຮັບຮອງ ແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ປະຈຳປີ 2019;

ວາລະທີ 8: ພິຈາລະນາ ຮັບຮອງຕໍ່ອາຍຸການຂອງ ສະມາຊິກສະພາບໍລິຫານ ແລະ ສະມາຊິກຄະນະກວດສອບອິດສະລະຊຸດປະຈຸບັນອີກໜຶ່ງສະໄໝ ແລະ ການປັບຕຳແໜ່ງພາຍໃນສະພາບໍລິຫານ;

ວາລະທີ 9: ຮັບຮອງເອົາ ການໃຫ້ສິດແກ່ສະພາບໍລິຫານ ໃນການພິຈາລະນາການຈ່າຍເງິນປັນຜົນລະຫວ່າງປີ 2019 ຖ້າຫາກບໍລິສັດມີຜົນກຳໄລຈາກການດຳເນີນງານທຸລະກິດ.

ວິທີການລົງຄະແນນສຽງ:

- ໜຶ່ງຮຸ້ນເທົ່າກັບໜຶ່ງສຽງ ແລະ ຜູ້ຖືຮຸ້ນໜຶ່ງທ່ານມີຄະແນນສຽງເທົ່າກັບຈຳນວນຮຸ້ນທັງໝົດທີ່ທ່ານຖືຢູ່;
- ໃນການລົງຄະແນນສຽງໃນແຕ່ລະວາລະກອງປະຊຸມ ປະທານຈະຖາມກອງປະຊຸມວ່າມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ; ຖ້າຫາກມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ ໃຫ້ທ່ານນັ້ນກາເຄື່ອງໝາຍ ✓ ລົງໃນຊ່ອງ ☐ ບໍ່ເຫັນດີ ໃນບັດລົງຄະແນນ ແລະ ຍົກບັດກາເຄື່ອງໝາຍນັ້ນຂຶ້ນ ຈົນກວ່າຈະມີເຈົ້າໜ້າທີ່ມາເກັບເອົາບັດລົງຄະແນນ ແລະ ສຳລັບຜູ້ຖືຮຸ້ນທີ່ບໍ່ໄດ້ຍົກບັດ ຖືວ່າຜູ້ຖືຮຸ້ນທ່ານນັ້ນມີມະຕິເຫັນດີຕາມທີ່ສະເໜີໃນກອງປະຊຸມ;

- ສໍາລັບຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນ ແລະ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຕາມທີ່ຜູ້ຖືຮຸ້ນໄດ້ລະບຸໄວ້ໃນໃບມອບສັນທະນັ້ນ ບໍລິສັດໄດ້ນໍາເອົາການລົງຄະແນນສຽງຕາມທີ່ຜູ້ຖືຮຸ້ນລະບຸໄວ້ໃນໃບມອບສັນທະດັ່ງກ່າວ ໄປບັນທຶກລວມຄະແນນໄວ້ລ່ວງໜ້າໃນເວລາທີ່ຜູ້ຕາງໜ້າລົງທະບຽນເປັນທີ່ຮຽບຮ້ອຍແລ້ວ ໂດຍຜູ້ຕາງໜ້າບໍ່ຕ້ອງລົງຄະແນນສຽງໃນບັດລົງຄະແນນສຽງໃນກອງປະຊຸມອີກ.

ການນັບຜົນການລົງຄະແນນສຽງ ແລະ ແຈ້ງຜົນການນັບຄະແນນສຽງ:

- ການນັບຜົນການລົງຄະແນນສຽງໃນແຕ່ລະວາລະຈະນັບຄະແນນສຽງຂອງຜູ້ຖືຮຸ້ນໃນກອງປະຊຸມ ແລະ ຄະແນນສຽງຂອງຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າທີ່ບໍລິສັດໄດ້ບັນທຶກໄວ້ລ່ວງໜ້າ ທີ່ອອກສຽງບໍ່ເຫັນດີ ມາລົບອອກຈາກຈໍານວນຮຸ້ນທັງໝົດ ຂອງຜູ້ທີ່ມາຮ່ວມປະຊຸມ ແລະ ລົງຄະແນນສຽງໃນແຕ່ລະວາລະ;
- ເມື່ອສິ້ນສຸດການປະຊຸມໃນແຕ່ລະວາລະແລ້ວ ທ່ານ ປະທານກອງປະຊຸມ ຈະຂໍໃຫ້ທ່ານຜູ້ຖືຮຸ້ນລົງມະຕິຮັບຮອງວ່າ ເຫັນດີ ຫຼື ບໍ່ເຫັນດີ ຫຼັງຈາກນັ້ນເຈົ້າໜ້າທີ່ຈະຄິດໄລ່ຄະແນນ ແລະ ປະທານກອງປະຊຸມຈະປະກາດຜົນການລົງຄະແນນສຽງໃຫ້ກອງປະຊຸມຮັບຊາບໃນແຕ່ລະວາລະທັນທີ ກ່ອນຈະເລີ່ມປະຊຸມໃນວາລະຕໍ່ໄປ.

ກໍລະນີຜູ້ຖືຮຸ້ນ ຫຼື ຜູ້ຮັບມອບສິດມີຄໍາຖາມ ຫຼື ຂໍ້ສະເໜີແນະໃດໆ ໃນແຕ່ລະວາລະລົບກວນທ່ານຍົກມືຂຶ້ນ ພ້ອມແຈ້ງຊື່, ນາມສະກຸນ ແລະ ສະຖານະວ່າເປັນຜູ້ຖືຮຸ້ນ ຫຼື ຜູ້ຮັບມອບສັນທະ ເພື່ອໃຊ້ປະກອບການບັນທຶກໃນບົດລາຍງານການປະຊຸມສາມັນຜູ້ຖືຮຸ້ນປະຈໍາປີ 2018 ແລະ ອີກເທື່ອໜຶ່ງ, ໂດຍອີງຕາມລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ, ຂ້າພະເຈົ້າຂໍອະນຸຍາດແຈ້ງໃຫ້ບັນດາທ່ານຊາບວ່າ: ໃນກອງປະຊຸມມື້ນີ້ບໍ່ອານຸຍາດໃຫ້ຜູ້ສັງເກດການປະກອບຄໍາເຫັນ ກ່ຽວກັບວາລະຂອງກອງປະຊຸມ.

ທັງນີ້ເພື່ອໃຫ້ເກີດຄວາມໂປ່ງໃສໃນການນັບຄະແນນສຽງ ຂ້າພະເຈົ້າຂໍລົບກວນອາສາສະມັກຜູ້ຖືຮຸ້ນ ຫຼື ຜູ້ຮັບມອບສິດຈາກຜູ້ຖືຮຸ້ນຢ່າງໜ້ອຍ 1 ທ່ານມາຮ່ວມເປັນສັກຂີພະຍານໃນການນັບຄະແນນ ໂດຍລົບກວນທ່ານແຈ້ງຊື່, ນາມສະກຸນ ແລະ ກະລຸນາແຈ້ງວ່າທ່ານເປັນຜູ້ຖືຮຸ້ນ ຫຼື ຮັບມອບສັນທະຈາກຜູ້ຖືຮຸ້ນທ່ານໃດ ແລະ ຂໍຮຽນເຊີນທ່ານໄປທີ່ຈຸດນັບຄະແນນເລີຍ. ໃນກອງປະຊຸມມີຜູ້ຖືຮຸ້ນ 1 ຄົນຄື ທ່ານ ນາງ ວຽງສະຫວາດ ວໍລະຈິດ, ເຊິ່ງເປັນຜູ້ຖືຮຸ້ນມາດ້ວຍຕົນເອງ ໄດ້ສະມັກມາຮ່ວມເປັນສັກຂີພະຍານໃນການນັບຄະແນນ ຮ່ວມກັບຄະນະກວດກາກອງປະຊຸມຜູ້ຖືຮຸ້ນ ແລະ ລົງຄະແນນສຽງ.

ຫຼັງຈາກນັ້ນທ່ານ ທ່ານ ໂພໄຊ ຈັນທະວົງສາ ປະທານກອງປະຊຸມ ເປັນຜູ້ກ່າວເປີດກອງປະຊຸມ ແລະ ດໍາເນີນການປະຊຸມໃນແຕ່ລະວາລະ ໂດຍອີງຕາມວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈໍາປີ 2018 ມີລາຍລະອຽດດັ່ງນີ້:

ວາລະທີ 1. ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມຜູ້ຖືຮຸ້ນ ປະຈໍາປີຜ່ານມາ

ທ່ານ ປະທານກອງປະຊຸມ ໄດ້ລາຍງານຕໍ່ທີ່ປະຊຸມດັ່ງນີ້:

1. ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈໍາປີ 2017

- ວາລະທີ 1, 2, 3, 4, 5, 6, 7, 8 ແລະ 10 ໄດ້ປະຕິບັດສໍາເລັດແລ້ວ;

- ວາລະທີ 9 ພິຈາລະນາ ແລະ ຮັບຮອງ ການໃຫ້ສິດແກ່ສະພາບໍລິຫານໃນການຊອກຫາ ແລະ ຄັດເລືອກເອົາບຸກຄົນທີ່ມີຄວາມຮູ້ຄວາມສາມາດບໍ່ວ່າຈະພາຍໃນ ຫຼື ຕ່າງປະເທດ ມາຮັບຕຳແໜ່ງຜູ້ອຳນວຍການໃຫຍ່ ຂອງບໍລິສັດທີ່ຫວ່າງລົງ ແມ່ນຢູ່ໃນຂັ້ນຕອນການຊອກຫາບຸກຄົນທີ່ມີຄວາມຮູ້ຄວາມສາມາດມາດຳລົງຕຳແໜ່ງ ເຊິ່ງຜ່ານມາໄດ້ມີການທົດລອງງານຜູ້ສະໝັກມາຈາກຕ່າງປະເທດ ແຕ່ຜ່ານການທົດລອງງານເຫັນວ່າບໍ່ຜ່ານ ດັ່ງນັ້ນ, ຈຶ່ງຍັງບໍ່ໄດ້ຮັບເທື່ອ ແລະ ໃນສິກປີ 2019 ນີ້ ທາງບໍລິສັດກໍ່ຍັງເປີດໂອກາດໃຫ້ບຸກຄົນທີ່ມີຄວາມສາມາດເຂົ້າມາສະໝັກ ແລະ ຖ້າມີຄວາມຄືບໜ້າຈະແຈ້ງໃຫ້ຊາບຜ່ານລະບົບເປີດເຜີຍຂໍ້ມູນຂອງ ຕລຊລ;
- ວາລະທີ 11 ພິຈາລະນາ ແລະ ຮັບຮອງ ການໃຫ້ສິດແກ່ສະພາບໍລິຫານ ໃນການພິຈາລະນາແບ່ງເງິນປັນຜົນພິເສດ ແມ່ນບໍ່ສາມາດແບ່ງເງິນປັນຜົນໄດ້ ເພາະວ່າການຕົກລົງທາງດ້ານການຮ່ວມທຶນລະຫວ່າງ ປທລ ກັບ ພູມ່າ ເອເນີຈີ ຍັງບໍ່ສາມາດຕົກລົງໄດ້ ອັນເນື່ອງມາຈາກຄວາມເສຍປຽບທາງດ້ານການຮ່ວມທຶນ.

2. ກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2018
- ວາລະທີ 1, 2, 3 ແລະ 4 ໄດ້ປະຕິບັດສຳເລັດແລ້ວ;
- ວາລະທີ 5 ພິຈາລະນາ ແລະ ຮັບຮອງ ການໃຫ້ສິດແກ່ສະພາບໍລິຫານບໍລິສັດ ເຊັນສັນຍາຮຸ້ນສ່ວນກັບ ບໍລິສັດ ພູ ມ່າ ເອເນີຈີ ເປັນຂາຮຸ້ນແກ່ບໍລິສັດລູກ 2 ບໍລິສັດ ໃນອັດຕາສ່ວນ 49% ແລະ ປທລ 51% ແມ່ນຢູ່ໃນຂັ້ນຕອນການເຈລະຈາຄັ້ງສຸດທ້າຍ. ປທລ ຈະແຈ້ງຜ່ານລະບົບເປີດເຜີຍຂໍ້ມູນຂອງ ຕລຊລ.

ຫຼັງຈາກທ່ານ ປະທານກອງປະຊຸມ ໄດ້ລາຍງານໃນວາລະນີ້ ແລ້ວກໍ່ໄດ້ເປີດໂອກາດຮຽນເຊີນ ຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ໃຫ້ສອບຖາມໄດ້.

ເມື່ອບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ ທ່ານ ປະທານກອງປະຊຸມ ຈຶ່ງແຈ້ງໃຫ້ທີ່ປະຊຸມຊາບວ່າ ລາຍງານຜົນການຈັດຕັ້ງປະຕິ ບັດມະຕິກອງປະຊຸມຜູ້ຖືຮຸ້ນ ປະຈຳປີຜ່ານມາ ເປັນການລາຍງານເພື່ອຊາບ ໂດຍບໍ່ມີການລົງຄະແນນສຽງ.

ວາລະທີ 2. ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2018

ທ່ານ ປະທານກອງປະຊຸມ ໄດ້ລາຍງານຕໍ່ທີ່ປະຊຸມວ່າ ກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2018 ໄດ້ຈັດຂຶ້ນໃນວັນທີ 01 ມິຖຸນາ 2018 ໂດຍກອງປະຊຸມໄດ້ພິຈາລະນາກິດຈະກຳຕ່າງໆ ເຊິ່ງກອງປະຊຸມດັ່ງກ່າວໄດ້ເຮັດບົດບັນທຶກຕາມເນື້ອໃນຂອງກອງປະຊຸມຢ່າງຖືກຕ້ອງ.

ຫຼັງຈາກທ່ານ ປະທານກອງປະຊຸມ ໄດ້ລາຍງານໃນວາລະນີ້ແລ້ວກໍ່ໄດ້ເປີດໂອກາດຮຽນເຊີນ ຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ໃຫ້ສອບຖາມໄດ້, ມີຜູ້ຖືຮຸ້ນປະກອບຄຳເຫັນດັ່ງນີ້:

Mr. KRAIWAL KADAVANICH ຜູ້ຖືຮຸ້ນມາດ້ວຍຕົນເອງ ປະກອບຄຳເຫັນດັ່ງນີ້:

1. ຢາກຈະໃຫ້ທາງບໍລິສັດ ເພີ່ມຂໍ້ຄວາມວ່າ ຖ້າເອກະສານສະບັບພາສາລາວ ແລະ ພາສາອັງກິດໃນສ່ວນໃດມີຄວາມໝາຍບໍ່ຄືກັນ ໃຫ້ຖືພາສາລາວເປັນຫຼັກ;

2. ໃນກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2018 ໃນວາລະທີ 1 ບໍລິສັດ ຍັງບໍ່ໄດ້ບັນທຶກໃນສ່ວນທີ່ວ່າ: ຖ້າບໍລິສັດ ມີການອອກປະກາດວ້ນທີປະຊຸມເປັນສາທາລະນະໃນເວັບໄຊ໌ແລ້ວ ຈະບໍ່ປ່ຽນວ້ນນັດໝາຍ ຫຼື ຖ້າປ່ຽນຕ້ອງ ແຈ້ງໃຫ້ຜູ້ຖືຮຸ້ນຊາບລ່ວງໜ້າກ່ອນວ້ນປະຊຸມ.

ທ່ານປະທານກອງປະຊຸມ ຕອບຄຳຖາມຂອງຜູ້ຖືຮຸ້ນວ່າ: ມອບໃຫ້ຄະນະຮັບຜິດຊອບປັບປຸງ ແລະ ແກ້ໄຂ.

ທ່ານ ນາງ ແສງລັດສະໝີ ສຸວ້ດ ຜູ້ຮັບມອບສ້ນທະຈາກ ທະນາຄານ ພັດທະນາລາວ ປະກອບຄຳເຫ້ນດ່ັງນ້ີ:

1. ບໍລິສັດໄດ້ຂາດທຶນມາແລ້ວ 3 ປີ ເຮັດໃຫ້ຜູ້ຖືຮຸ້ນບໍ່ໄດ້ຮັບເງິນປ້ນຜົນ ບໍລິສັດຈະມີແຜນແກ້ໄຂແນວໃດ?
2. ກ່ຽວກ້ບຕິວເລກການໂອນຊ້ບສິນໃຫ້ 2 ບໍລິສັດລູກ ໄດ້ດຳເນີນໄປຮອດໃສ ສຳເລັດແລ້ວ ຫຼື ບໍ່?

ທ່ານປະທານກອງປະຊຸມ ຕອບຄຳຖາມຂອງຜູ້ຖືຮຸ້ນ ດ່ັງນ້ີ:

1. ການທ່ີຈະແກ້ໄຂການຂາດທຶນຂອງບໍລິສັດແມ່ນຕ້ອງປັບໂຄງສ້າງລາຄານ້ຳມ້ນ ອ້ງຕາມດຳລັດວ່າດ້ວຍນ້ຳມ້ນເຊ້ືອ ໄຟ ເລທ 331/ນຍ ທ່ີຈະເລ່ີມຈ້ດຕ້ັງປະຕິບ້ດໃນວ້ນທ 01 ມ.ຖ.ນາ 2019 ນ້ີນ້ີຄາດວ່າຈະມ້ກຳໄລຂ້ນຕ້ນຢຸ່ທ 8-9 ສ່ວນຮ້ອຍ, ບໍລິສັດຈະເບ່ີງຄືນແຫ່ງລາຍຮ້ບໃນປ້ດຈຸ້ບ້ນອາດຈະມ້ການປ້ບປຸງ ເພ່ີມການຂາຍນ້ຳມ້ນເຄ່ືອງ ຫຼື ແຫ່ງ ລາຍຮ້ບອ່ືນໆ ເພ່ືອໃຫ້ມ້ລາຍຮ້ບເພ່ີມຂ້ນ, ຄວບຄຸມລາຍຈ່າຍ ຈະເຮ້ດໃຫ້ບໍລິສັດມ້ກຳໄລ ຂ້າພະເຈ້າຄ່ດວ່າ 3 ປ້ດໃຈນ້ີເກ່ີດຂ້ນ ກ່ໍຈະພ້ເປ້ນໄປໄດ້ທ່ີຈະເຮ້ດໃຫ້ ປທລ ມ້ກຳໄລ, ເລ່ືອງອ້ດຕາດອກເບ້ຍ ປະມານເດ່ືອນ 7-8 ປ 2019 ບໍລິສັດ ຈະຊຳລະຕ້ນທຶນຈຳນວນໜ່ຶງເຮ້ດໃຫ້ພາລະການຈ່າຍດອກເບ້ຍຫຼ້ດລ່ງ ແລະ ທ່ານ ນາງ ຈ້ນທະ ດອມ ຮອງປະທານສະພາບໍລິຫານ ສະເໜ່ເພ່ີມຕ່ື່ມວ່າ ນ້ບແຕ່ເລ່ີມເປ່ີດບໍລິສັດ ຫາ ປ 2015 ກຳໄລຂ້ນຕ້ນຈະຢຸ່ທ່ີ ປະມານ 9-11 ສ່ວນຮ້ອຍ ເນ່ືອງຈາກມ້ການຄວບຄຸມລາຄານ້ຳມ້ນຈາກລ້ດຖະບານ. ຫ້ງວ້ນທ 01 ມ.ຖ.ນາ 2019 ດຳລັດວ່າດ້ວຍນ້ຳມ້ນເຊ້ືອໄຟ ເລທ 331/ນຍ ຈະເລ່ີມປະຕິບ້ດໃນລາຄາຂອງ CIF ຄ ການປ່ຽນແປງລາຄາ 15 ວ້ນ ຕ່ໍເທ່ືອ. ສຳລ້ບທຸລະກ້ດນ້ຳມ້ນທາງພາກລ້ດຈະຄ້ດຈອນເອົາແຕ່ບໍລິສັດທ່ີມ້ມາດຕະຖານ ຮອງຮ້ບເລ່ືອງຂອງ ການນຳເຂ້ົາທ່ີມ້ສານນ້ຳມ້ນທ ຫ້າ ຫາ ສ້ບລ້ານຂ້ນໄປ, ໜ່ຶງໃນບໍລິສັດທ່ີເພ່ີ່ນຈະຄ້ດເລ້ອກນ້ັນ ແມ່ນ ປທລ ເປ້ນ ບໍລິສັດທ້ໍາອ້ດທ່ີໄດ້ຮ້ບຮອງສ້ໍາເລ້ດຄ ບໍລິສັດ ປ່ໂຕຣເທຣດ ພຸ່ມ່ າ ເອເນ່ີຈ ນ້ໍາເຂ້ົ້າ-ສ່ົ່ງອອກ ຈ້ໍາກ້ດ ແລະ ບໍລິສັດ ປ່ ໂຕຣເທຣດ ພຸ່ມ່ າ ເອເນ່ີຈ ດ່ິສທະ່ິວຊ້ນ ຈ້ໍາກ້ດ. ໃນປະເທດລາວມ່ບໍລິສັດນ້ຳມ້ນທ້ງໝ່ດ 22 ບໍລິສັດ ຫ້ງວ້ນທ 01 ມ.ຖ.ນາ 2019 ບໍລິສັດທ່ີຈະສາມາດນຳເຂ້ົ້ານ້ຳມ້ນໄດ້ຈະເຫ່ືອປະມານ 6-7 ບໍລິສັດ. ຄາດວ່າຍອດຂາຍຂອງ ບໍລິສັດຈະເພ່ີ່ມຂ້ນ. ກ່ຽວກ້ບໂຄງສ້າງລາຄາທ່ີຜ່ານມາກຳໄລຂ້ນຕ້ນຢຸ່ທ່ີ 4,17 ສ່ວນຮ້ອຍທຽບກ້ບປ 2015 ແມ່ນ 9-10 ສ່ວນຮ້ອຍ ແຕ່ກ່ອນລ້ດຖະບານໃຫ້ ປທລ ມ້ກຳໄລ 276 ກ່ບຕ່ໍລ້ດ ແຕ່ຫ້ງຈາກການນຳໃຊ້ດຳລັດວ່າ ດ້ວຍນ້ຳມ້ນເຊ້ືອໄຟ ເລທ 331/ນຍ ປທລ ຈະໄດ້ເພ່ີ່ມອ່ີກ 100 ສ່ວນຮ້ອຍຄ່ໄດ້ 560 ກ່ບຕ່ໍລ້ດ ຈະເຮ້ດໃຫ້ມ້ກຳ ໄລປະມານ 10 ກວ່າຕ້ື້ກ່ບ.
2. ສຳລ້ບການຕອບຄຳຖາມຂ້ໍທ 2 ແມ່ນຢ່ໃນເນ້ືອໃນຂອງວາລະທ 3 ແລ້ວ.

ເມ່ືອບໍ່ມ້ຜູ້ຖືຮຸ້ນທ່ານໃດສອບຖາມ ທ່ານ ປະທານປະທານ ຈ່ຶ່ງສະເໜ່ໃຫ້ກອງປະຊຸມພ່ິຈາລະນາ ແລະ ຮ້ບຮອງເອົາບ່ດບ້ນທ່ືກກອງປະຊຸມວ່ິສາມ້ນຜູ້ຖ່ືຮຸ້ນ ຄ້ັງທ 1/2018.

ມະຕ:ິ ກອງປະຊຸມໄດ້ພ່ິຈາລະນາແລ້ວ ແລະ ມ່ມະຕ່ເຫ້ນດ່ຮ້ບຮອງເອົາບ່ດບ້ນທ່ືກກອງປະຊຸມວ່ິສາມ້ນຜູ້ຖ່ ຮຸ້ນ ຄ້ັງທ 1/2018 ດ້ວຍຄະແນນສຽງຫຼາຍກວ່າເຄ່ິ່ງໜ່ຶ່ງຂອງຈຳນວນສຽງທ່ີເຂ້ົ້າຮ່ວມກອງປະຊຸມດ່ັງນ້ີ:

- ເຫັນດີ 198.510.521 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.510.521 ສຽງ ຄິດເປັນ 100 %.


ວາລະທີ 3. ລາຍງານຕົວເລກຊັບສິນຂອງ ປທລ ທີ່ໂອນໃຫ້ 2 ບໍລິສັດລູກ ພ້ອມທັງ ພິຈາລະນາ ແລະ ຮັບຮອງ ໂຄງສ້າງ, ການບໍລິຫານ ແລະ ສັດສ່ວນການຖືຄອງຮຸ້ນຂອງ 2 ບໍລິສັດລູກ ຄື: (1) ບໍລິສັດ ປິໂຕຣເທຣດ ພຸ່ມາ ເອເນີຈີ ນຳເຂົ້າ ແລະ ສົ່ງອອກ ຈຳກັດ (2) ບໍລິສັດ ປິໂຕຣເທຣດ ພຸ່ມາ ເອເນີຈີ ດີສທະບິວຊັນ ຈຳກັດ

ທ່ານ ປະທານກອງປະຊຸມ ໄດ້ລາຍງານຕໍ່ທີ່ປະຊຸມ ເຊິ່ງມີລາຍລະອຽດດັ່ງນີ້:

1. ບໍລິສັດ ປິໂຕຣເທຣດ ພຸ່ມາ ເອເນີຈີ ນຳເຂົ້າ-ສົ່ງອອກ ຈຳກັດ

ຊັບສິນທີ່ປະກອບເປັນທຶນ	ກີບ
ມູນຄ່າລົງທຶນກໍ່ສ້າງສາງປ່ຳນ້ຳມັນ	25.103.493.103
ມູນຄ່າທີ່ດິນ	52.828.573.159
ຊັບສິນປະເພດອື່ນໆ	9.263.308.960
ມູນຄ່າລົງທຶນປ່ຳນ້ຳມັນ	56.803.843.576
ທີ່ດິນເຊົ່າສ້າງປ່ຳນ້ຳມັນ	6.171.016.573
ລວມມູນຄ່າ	**150.170.235.370**

ໂຄງສ້າງ ບໍລິສັດ ປີໂຕຣເທຣດ ພຸມ່າ ເອເນີຈີ ນຳເຂົ້າສົ່ງອອກ ຈຳກັດ-




ສັດສ່ວນການຖືຄອງຮຸ້ນ

1. ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ: 74.250.000 ຮຸ້ນ = 99% = 148.500.000.000 ກີບ;
2. ທ່ານ ຈັນທອນ ສິດທິໄຊ: 750.000 ຮຸ້ນ = 1% = 1.500.000.000 ກີບ.

2. ບໍລິສັດ ປີໂຕຣເທຣດ ພຸມ່າ ເອເນີຈີ ດິສທະບິວຊັນ ຈຳກັດ

ຊັບສິນທີ່ປະກອບເປັນທຶນ	ກີບ
ມູນຄ່າລົງທຶນປ໊ຳນ້ຳມັນ	22.749.888.649
ຊັບສິນປະເພດອື່ນໆ	17.484.578.658
ຊັບສິນບັດຄົງທີ່ລະຫວ່າງກໍ່ສ້າງ	1.446.493.432
ທີ່ດິນເຊົ່າສ້າງປ໊ຳນ້ຳມັນ	5.647.238.000
ພາຫະນະຮັບໃຊ້ຫ້ອງການ	1.635.743.621
ເຄື່ອງໃຊ້ຫ້ອງການ	1.098.252.069
ລວມມູນຄ່າ	**50.62.194.428**

ໂຄງສ້າງ ບໍລິສັດ ປີໂຕຣເທຣດ ພູມ່າ ເອເນີຈີ ດິສທະບິວຊັ່ນ ຈຳກັດ



ສັດສ່ວນການຖືຄອງຮຸ້ນ

1. ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ: 24.750.000 ຮຸ້ນ = 99% = 45.500.000.000 ກີບ;
2. ທ່ານ ຈັນທອນ ສິດທິໄຊ: 250.000 ຮຸ້ນ = 1% = 500.000.000 ກີບ.

ຫຼັງຈາກທ່ານ ປະທານກອງປະຊຸມ ໄດ້ລາຍງານໃນວາລະນີ້ແລ້ວກໍ່ໄດ້ເປີດໂອກາດຮຽນເຊີນ ຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ໃຫ້ສອບຖາມໄດ້, ມີຜູ້ຖືຮຸ້ນປະກອບຄຳເຫັນດັ່ງນີ້:

Mr. KRAIWAL KADAVANICH ຜູ້ຖືຮຸ້ນມາດ້ວຍຕົນເອງ ປະກອບຄຳເຫັນດັ່ງນີ້:

1. ແຜນວາດໂຄງສ້າງຂອງ ບໍລິສັດ ປີໂຕຣເທຣດ ພູມ່າ ເອເນີຈີ ນຳເຂົ້າ-ສົ່ງອອກ ຈຳກັດ ແລະ ບໍລິສັດ ປີໂຕຣເທຣດ ພູມ່າ ເອເນີຈີ ດິສທະບິວຊັ່ນ ຈຳກັດ ບໍ່ຖືກຕ້ອງ ກໍລະນີ Assistant CEO ຈະຕ້ອງອອກມາທາງຂ້າງ ບໍ່ແມ່ນອອກມາກົງກັນກັບແນວຕັ້ງ ເພາະວ່າ Assistant CEO ເປັນຜູ້ຊ່ວຍ. ອັນທີສອງໃນສ່ວນຂອງ ບໍລິສັດ ປີໂຕຣເທຣດ ພູມ່າ ເອເນີຈີ ນຳເຂົ້າ-ສົ່ງອອກ ຈຳກັດ ມີລູກສອນຊ້ຳກັນ ສ່ວນບໍລິສັດ ປີໂຕຣເທຣດ ພູມ່າ ເອເນີຈີ ດິສທະບິວຊັ່ນ ຈຳກັດ ບໍ່ມີລູກສອນໃນສ່ວນຂອງ Human Resource ແລະ Office Admin;
2. ສະເໜີວ່າ ໃນແຜນວາດໂຄງສ້າງເຖິງວ່າມັນຈະບໍ່ຖືກຕ້ອງບາງສ່ວນ ແຕ່ກໍ່ສາມາດອ່ານເຂົ້າໃຈ ສະເໜີໃຫ້ນຳມາສະແດງຢູ່ຈໍໂປຣເຈັກເຕີໃນກອງປະຊຸມ ຈະເຮັດໃຫ້ຜູ້ຖືຮຸ້ນສາມາດເຫັນໄດ້ແຈ້ງກວ່ານີ້ ເພາະໃນເອກະສານມັນຕົວໜ້ອຍຫຼາຍ ("ພະນັກງານຮັບຜິດຊອບໄດ້ສະແດງແຜນວາດໂຄງສ້າງໃຫ້ຜູ້ຖືຮຸ້ນເຫັນໃນເວລາທີ່ຜູ້ຖືຮຸ້ນສະເໜີແລ້ວ");

3. ເນື່ອງຈາກວ່າຕາຕາລາງທີ່ໄດ້ແຈ້ງໃນວາລະທີນີ້ ເປັນຊັບສິນທີ່ປະກອບເປັນທຶນຂອງທັງສອງບໍລິສັດ ເປັນການແຈ້ງໃຫ້ຜູ້ຖືຮຸ້ນເພື່ອຊາບ ເພາະວ່າໄດ້ມີການຮັບຮອງແລ້ວ. ແຕ່ວາລະທີ 1 ກໍ່ຍັງສະແດງຕົວເລກ ແລະ ຕາຕາລາງດຽວກັນ ບໍລິສັດ ບໍ່ສາມາດທີ່ຈະອ້າງເຖິງໄດ້ບໍ່ ຈະຕ້ອງບອກຊໍ້າ 2 ຄັ້ງບໍ່?.

ທ່ານປະທານກອງປະຊຸມ ຕອບຄຳຖາມຂອງຜູ້ຖືຮຸ້ນວ່າ: ການແຕ້ມແຜນວາດໂຄງສ້າງບໍ່ຖືກຕ້ອງໃນບາງສ່ວນ ແລະ ການຊໍ້າກັນຂອງຕາຕາລາງຕົວເລກຊັບສິນທີ່ປະກອບເປັນທຶນ ຂອງວາລະທີ 1 ແລະ ວາລະທີ 3 ໃຫ້ຄະນະຮັບຜິດຊອບ ພິຈາລະນາປັບປຸງ ແລະ ແກ້ໄຂຕາມຄວາມເໝາະສົມ.

ເມື່ອບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ ທ່ານ ປະທານ ຈຶ່ງແຈ້ງໃຫ້ທີ່ປະຊຸມຊາບວ່າວາລະນີ້ເປັນການລາຍງານ ໂດຍບໍ່ມີການລົງຄະແນນສຽງ.

ວາລະທີ 4. ພິຈາລະນາ ແລະ ຮັບຮອງ ເອກະສານລາຍງານການເງິນທີ່ຜ່ານການກວດສອບຂອງ ຜູ້ກວດສອບພາຍນອກ ປະຈຳປີ 2018 ແລະ ບົດລາຍງານຜົນການດຳເນີນທຸລະກິດ ປະຈຳປີ 2018

ທ່ານ ປະທານກອງປະຊຸມ ໄດ້ລາຍງານຕໍ່ທີ່ປະຊຸມດັ່ງນີ້:

1. ໃນເອກະສານລາຍງານການເງິນ ປີ 2018 ປທລ ມີ

- ຍອດຂາຍທັງໝົດ	1.135	ຕື້ກີບ;
- ຕົ້ນທຶນຂາຍ	1.088	ຕື້ກີບ;
- ກຳໄລຂັ້ນຕອນ	47	ຕື້ກີບ;
- ຂາດທຶນ ຈາກການດຳເນີນງານ	(38)	ຕື້ກີບ;
- ຂາດທຶນ ກ່ອນອາກອນ	(64)	ຕື້ກີບ;
- ຂາດທຶນ ໃນປີ	(65)	ຕື້ກີບ;
- ຊັບສິນທັງໝົດ	722	ຕື້ກີບ;
- ໜີ້ສິນທັງໝົດ	410	ຕື້ກີບ;
- ທຶນ	312	ຕື້ກີບ.

1. ຜົນການດຳເນີນທຸລະກິດ 2018

2.1. ການຂາຍ

ຍອດຂາຍລວມຂອງ 2018 ປະຕິບັດໄດ້: 152.451.965 ລິດ ຫຼື 72,6 % ຂອງແຜນປີ

ແຜນການຂາຍ (ລ້ານລິດ)	ຜົນການປະຕິບັດ (ລ້ານລິດ)	ສ່ວນຕ່າງ (ລ້ານລິດ)	ຄິດເປັນ %
210	152	58	17,4

2.2. ການຂະຫຍາຍໂຕຂອງປີໂຕຣເທຣດ

ປີ	ປ໋ຳ (ລ້ານລິດ)	% ຂະຫຍາຍຕົວ	ໂຄງການ (ລ້ານລິດ)	% ຂະຫຍາຍຕົວ	Re-Export (ລ້ານລິດ)	% ຂະຫຍາຍຕົວ	ຍອດຂາຍລວມ	% ຂະຫຍາຍຕົວ
2016	69	7	92	41	49	277	210	50
2017	77	12	61	34-	5	90-	143	32-
2018	74	5-	77	11	-	-	152	6

2.3. ການຂະຫຍາຍຕົວຂອງປ໋ຳ

ລ/ດ	ປະເພດປ໋ຳ	ປ໋ຳເປີດໃໝ່ 2018	ແຜນການເປີດປ໋ຳ 2018	ປ໋ຳທັງໝົດ
1	ພລາຕິນຳ PLT	0	0	5
2	ໂກລ GLD	1	0	15
3	ມາດຕະຖານ STD	9	1	36
4	ທ້ອງຖິ່ນພັດທະນາ THN	3	0	62
	ລວມ	13	1	118

2.4. ການຂະຫຍາຍຕົວຂອງລູກຄ້າໂຄງການ

ລ/ດ	ປະເພດຄູ່ຄ້າ	2018	ແຜນການ 2018	ໂຄງການທັງໝົດ
1	ໂຄງການ ກໍ່ສ້າງ PRO+CON	7	3	30
2	ອຸດສາຫະກຳ ການຄ້າ IND+TRA	5	2	27
ລວມ		12	5	57

ຫຼັງຈາກທ່ານ ປະທານກອງປະຊຸມ ໄດ້ລາຍງານໃນວາລະນີ້ແລ້ວກໍ່ໄດ້ເປີດໂອກາດຮຽນເຊີນ ຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ໃຫ້ສອບຖາມໄດ້, ມີຜູ້ຖືຮຸ້ນປະກອບຄຳເຫັນດັ່ງນີ້:

ທ່ານ ກ້າ ໄຟດ່ຳງລໍເບຣຍຢາວ ຜູ້ຖືຮຸ້ນມາດ້ວຍຕົນເອງ ປະກອບຄຳເຫັນດັ່ງນີ້:

1. ອັດຕາແລກປ່ຽນເປັນປັດໃຈຫຼັກທີ່ສົ່ງຜົນເຮັດໃຫ້ຜົນປະກອບການຂອງບໍລິສັດຂາດທຶນບໍ່?;
2. ບໍລິສັດມີນະໂຍບາຍແນວໃດຕໍ່ກັບຫ໋ວໜ່ວຍທຸລະກິດທີ່ມີການຂະຫຍາຍຕົວ ແລະ ຫ໋ວໜ່ວຍທຸລະກິດທີ່ບໍ່ຂະຫຍາຍຕົວ?;
3. ບໍລິສັດ ຈະມີຍຸດທະສາດຫຍັງໃນການປັບອັດຕາສ່ວນ ROA, ROE ແລະ ອື່ນໆ, ມີຍຸດທະສາດແນວໃດເພື່ອແກ້ໄຂຜົນປະກອບການຂອງບໍລິສັດໃຫ້ໄດ້ກຳໄລ ແລະ ຂ້າພະເຈົ້າມາບໍ່ທັນຟັງວາລະທີ 1,2,3 ຂໍອະນຸຍາດໃຫ້ທ່ານປະທານເລົ່າໃຫ້ຟັງອີກແດ່.

ທ່ານປະທານກອງປະຊຸມ ຕອບຄຳຖາມຂອງຜູ້ຖືຮຸ້ນດັ່ງນີ້:

1. ຈາກໂຄງສ້າງລາຍຈ່າຍ ການຂາດທຶນຈາກອັດຕາແລກປ່ຽນເປັນບັນຫາໃຫຍ່ ກວມເອົາອັດຕາສ່ວນຫຼາຍຂອງ ລາຍຈ່າຍ. ປທລ ມີຂໍ້ຈຳກັດບໍ່ສາມາດເຮັດສັນຍາແລກປ່ຽນຊື້-ຂາຍລ່ວງໜ້າໄດ້ ຈຳເປັນຕ້ອງໄປຕາມກົນໄກ ທະນາຄານ ເພາະວ່າການຂາຍສ່ວນຫຼາຍແມ່ນໄດ້ຮັບເງິນກີບ ເວລານຳເຂົ້ານ້ຳມັນຕ້ອງຊຳລະເປັນເງິນໂດລາ ຈຳ ເປັນຕ້ອງໄດ້ແລກກັບທະນາຄານ, ການຂຶ້ນ-ລົງຂອງອັດຕາແລກປ່ຽນເປັນໄປກົນໄກ ບໍ່ສາມາດຄວບຄຸມໄດ້. ແລະ ທ່ານ ນາງ ຈັນທະດອນ ຣອງສະພາບໍລິຫານ ປະກອບຄຳເຫັນເພີ່ມຕື່ມວ່າ: ປັດຈຸບັນ ບໍລິສັດໄດ້ແກ້ໄຂ ບັນຫາອັດຕາແລກປ່ຽນໂດຍການເຮັດສັນຍາຊຳລະເປັນເງິນໂດລາສະຫາລົດກັບບັນດາໂຄງການຂອງ ບໍລິສັດເຊັ່ນ: ໂຄງການທາງດ່ວນ, ໂຄງການພຸເບ້ຍ ມາຍນິ່ງ ກວມເອົາ 30 ສ່ວນຮ້ອຍຂອງຍອດຂາຍ, ປທລ ພະຍາຍາມປຶກສາກັບທະນາຄານເພື່ອເຮັດສັນຍາແລກປ່ຽນຊື້-ຂາຍລ່ວງໜ້າ;
2. ນະໂຍບາຍການດຳເນີນທຸລະກິດຂອງບໍລິສັດ ກ່ອນຈະລົງທຶນບໍລິສັດໄດ້ຄຳນຶງເຖິງສະຖານທີ່ ໂດຍ ບໍລິສັດ ຈະ ມີການສຳຫຼວດກ່ອນວ່າພື້ນທີນັ້ນມີຈັກຫຼັງຄາເຮືອນ, ມີການໄປຈົດເອົາສະຖິຕິການຜ່ານໄປ-ມາຂອງລົດນ້ອຍ ແລະ ລົດໃຫຍ່ໃນແຕ່ລະວັນຂອງຂົງເຂດນັ້ນວ່າມີປະລິມານເທົ່າໃດ ເພື່ອນຳມາຄຳນວນວ່າຈະລົງທຶນຂະໜາດ ໃດເພື່ອຈະໃຫ້ໄດ້ຈຸດກຸ້ມທຶນ. ໃນຕົວເມືອງໃຫຍ່ບໍລິສັດຈະລົງທຶນເຮັດເປັນປ້ຳຂະໜາດໃຫຍ່ ແລະ ໃນ ສະຖານທີ່ນັ້ນກໍ່ຈະມີຮ້ານອາຫານ, ຮ້ານກາເຟ ແລະ ການບໍລິການອື່ນໆ ໂດຍບໍລິສັດຈະເກັບຄ່າເຊົ່າ ສ່ວນເຂດ ທີ່ບໍ່ຢູ່ໃນຕົວເມືອງກໍ່ຈະລົງທຶນເຮັດເປັນປ້ຳຂະໜາດອື່ນ ຂຶ້ນກັບການພິຈາລະນາການຊົມໃຊ້ນ້ຳມັນໃນຂົງເຂດ ນັ້ນ, ບໍລິສັດໄດ້ເຮັດບັດເຕີມນ້ຳມັນເພື່ອໃຫ້ຜູ້ໃຊ້ໄດ້ສະສົມຄະແນນ, ປັດຈຸບັນ ມີຫຼາຍບໍລິສັດໄປຕັ້ງປ້ຳໃຫຍ່ ກວ່າໃນຂົງເຂດທີ່ປ້ຳທ້ອງຖິ່ນພັດທະນາຂອງບໍລິສັດຕັ້ງຢູ່ ເຮັດໃຫ້ປ້ຳທ້ອງຖິ່ນພັດທະນາຂາຍບໍ່ໄດ້. ດັ່ງນັ້ນ ຄະນະສະພາບໍລິຫານໄດ້ພິຈາລະນາແລ້ວວ່າ ບໍລິສັດຈະບໍ່ຂະຫຍາຍປ້ຳທ້ອງຖິ່ນພັດທະນາຕໍ່ ແລະ ໄດ້ປິດປ້ຳ ທ້ອງຖິ່ນພັດທະນາຈຳນວນໜຶ່ງລົງເພາະວ່າເປັນປ້ຳທີ່ບໍ່ມີປະສິດທິຜົນ. ປັດຈຸບັນ ບໍລິສັດເນັ້ນຂາຍນ້ຳມັນໃຫ້ກັບ ໂຄງການຕ່າງໆ;
3. ຕໍ່ກັບບັນຫາຕ່າງໆທີ່ຂ້າພະເຈົ້າ ໄດ້ເວົ້າໄປແລ້ວໃນເບື້ອງຕົ້ນ ອັນໃດທີ່ເປັນປັດໃຈຫຼັກກໍ່ໄດ້ຍົກຂຶ້ນແລ້ວ 1.) ການຄວບຄຸມລາຄານ້ຳມັນຂອງລັດຖະບານ, 2.) ປັດໃຈເລື່ອງອັດຕາແລກປ່ຽນ, 3.) ຄ່າໃຊ້ຈ່າຍໃນການຂາຍ ກໍ່ຖືວ່າຫຼຸດລົງຫຼາຍ ໄດ້ມີການກວດກາເບິ່ງຄືນວ່າມັນສຸງຢູ່ຈຸດໃດ ແລະ ແກ້ໄຂ. ສາມປັດໃຈທີ່ເວົ້າມານີ້ມີຜ່າ ອ່ຽງຫຼຸດລົງຫຼາຍ, ບໍລິສັດພະຍາຍາມເພີ່ມຍອດຂາຍ ແລະ ຫຼຸດລາຍຈ່າຍ.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງເອົາ ເອກະສານລາຍງານການເງິນທີ່ຜ່ານ ການກວດສອບຂອງ ຜູ້ກວດສອບພາຍນອກ ປະຈຳປີ 2018 ແລະ ບົດລາຍງານຜົນການດຳເນີນທຸລະກິດ ປະຈຳປີ 2018 ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ 198.511.521 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.511.521 ສຽງ ຄິດເປັນ 100 %.

ວາລະທີ 5. ພິຈາລະນາ ແລະ ຮັບຮອງ ບໍ່ໃຫ້ມີການປັນຜົນ ຈາກຜົນການດຳເນີນທຸລະກິດປະຈຳປີ 2018 ອັນເນື່ອງມາຈາກບໍລິສັດ ຂາດທຶນໃນການດຳເນີນທຸລະກິດ

ທ່ານ ປະທານ ໄດ້ລາຍງານຕໍ່ທີ່ປະຊຸມດັ່ງນີ້: ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ເລກທີ 46/ສພຊ ລົງວັນທີ 26 ທັນວາ 2013 ມາດຕາ 155 "ຫ້າມບໍ່ໃຫ້ບໍລິສັດ ຈ່າຍເງິນປັນຜົນເມື່ອບໍລິສັດຍັງມີເງິນຂາດທຶນ ຢ່າງຕໍ່ເນື່ອງໃນຊຸມປີຜ່ານມາ".

ຫຼັງຈາກທ່ານ ປະທານ ໄດ້ລາຍງານໃນວາລະນີ້ ແລ້ວກໍ່ໄດ້ເປີດໂອກາດຮຽນເຊີນ ຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ໃຫ້ສອບຖາມໄດ້.

ເມື່ອບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ ທ່ານ ປະທານກອງປະຊຸມ ຈຶ່ງສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງ ບໍ່ໃຫ້ມີການປັນຜົນ ຈາກຜົນການດຳເນີນທຸລະກິດປະຈຳປີ 2018 ອັນເນື່ອງມາຈາກບໍລິສັດ ຂາດທຶນໃນການດຳເນີນທຸລະກິດ

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງ ບໍ່ໃຫ້ມີການປັນຜົນ ຈາກຜົນການດຳເນີນທຸລະກິດປະຈຳປີ 2018ອັນເນື່ອງມາຈາກບໍລິສັດ ຂາດທຶນໃນການດຳເນີນທຸລະກິດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ 198.511.521 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.511.521 ສຽງ ຄິດເປັນ 100 %.

ວາລະທີ 6. ພິຈາລະນາ ແລະ ຮັບຮອງ ແຜນການດຳເນີນທຸລະກິດຂອງ ບໍລິສັດ ປະຈຳປີ 2019

ທ່ານ ປະທານກອງປະຊຸມ ໄດ້ລາຍງານຕໍ່ທີ່ປະຊຸມດັ່ງນີ້:

1. ແຜນການຂະຫຍາຍປ້ຳປະຈຳປີ 2019

ລ/ດ	ປະເພດປ້ຳ	ແຜນການຂະຫຍາຍ
1	ພລາຕິນ້ຳ PLT	0
2	ໂກລ GLD	0
3	ມາດຕະຖານ STD	16
4	ທ້ອງຖິ່ນພັດທະນາ THN	0
ລວມ		16

2. ແຜນການຂະຫຍາຍຄູ່ຄ້າໂຄງການປະຈຳປີ 2019

ລ/ດ	ຄູ່ຄ້າ	ແຜນການຂະຫຍາຍ
1	ໂຄງການ ກໍ່ສ້າງ-PRO+CON	16
2	ອຸດສາຫະກຳ ການຄ້າ-IND+TRA	1
ລວມ		17

3. ແຜນການຂາຍປະຈຳປີ 2019

ລ/ດ	ເປົ້າໝາຍການຂາຍ	ແຜນການຂາຍ (ລ້ານລິດ)
1	ຂາຍຜ່ານປ໊ຳ	97
2	ຂາຍຜ່ານໂຄງການ	156
ລວມ:		253

ສຳລັບການຄາດຄະເນກຳໄລ-ຂາດທຶນ ຂອງບໍລິສັດ ປີ 2019 ມີດັ່ງນີ້:

- ລາຍຮັບ 1.850,40 ຕື້ກີບ;
- ຕົ້ນທຶນຈາກການຂາຍ 1.696,08 ຕື້ກີບ;
- ກຳໄລຂັ້ນຕົ້ນ 154,31 ຕື້ກີບ;
- ລ່າຍຈ່າຍໃນການບໍລິຫານ 64,33 ຕື້ກີບ;
- ກຳໄລຈາກການດຳເນີນງານ 64,65 ຕື້ກີບ;
- ລ່າຍຈ່າຍອັດຕາແລກປ່ຽນ 6,60 ຕື້ກີບ;
- ລ່າຍຈ່າຍດອກເບ້ຍ 26,64 ຕື້ກີບ;
- ກຳໄລກ່ອນຫັກອາກອນ 31,40 ຕື້ກີບ;
- ກຳໄລສຸດທິ 14,68 ຕື້ກີບ.

ຫຼັງຈາກທ່ານ ປະທານ ໄດ້ລາຍງານໃນວາລະນີ້ ແລ້ວກໍ່ໄດ້ເປີດໂອກາດຮຽນເຊີນ ຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ໃຫ້ສອບຖາມໄດ້. ມີຜູ້ຖືຮຸ້ນປະກອບຄຳເຫັນດັ່ງນີ້:

Mr. KRAIWAL KADAVANICH ຜູ້ຖືຮຸ້ນມາດ້ວຍຕົນເອງ ປະກອບຄຳເຫັນດັ່ງນີ້:

1. ການສະເໜີແຜນປະຈຳປີ 2019 ຈະມີປ໊ຳຢູ່ 4 ປະເພດຄື: 1.) ພລາຕິນຳ PLT, 2.) ໂກລ GLD, 3.) ມາດຕະຖານ STD ແລະ 4.) ທ້ອງຖິ່ນພັດທະນາ THN ຂໍໃຫ້ທ່ານ ນິຍາມປ໊ຳທັງ 4 ປະເພດວ່າມັນຕ່າງກັນ ຈັງໃດ? ມັນວັດທີ່ຂະໜາດ ຫຼື ວັດທີ່ຊຸມຊົນ ຫຼື ວັດທີ່ສິ່ງແວດລ້ອມ ຫຼື ວັດທີ່ການບໍລິການພາຍໃນປ໊ຳນ້ຳມັນ;
2. ສືບເນື່ອງຈາກວ່າ ວາະທີ 4 ໃນເອກະສານ ຂໍ້ທີ 1 ແລະ 2 ກ່ຽວກັບແຜນ ແລະ ປະຕິບັດໄດ້ ມັນບໍ່ໄດ້ສຳເລັດ ຕາມແຜນ ແຕ່ໃນເມື່ອບໍລິສັດມີການປັບແຜນສືບຕໍ່ມາໃນປີ 2019 ວ່າບໍລິສັດຈະຂະຫຍາຍສະເພາະແຕ່ປ໊ຳ ມາດຕະຖານ STD ໂດຍບໍ່ຂະຫຍາຍປ໊ຳພລາຕິນຳ PLT, ປ໊ຳໂກລ GLD ແລະ ປ໊ຳທ້ອງຖິ່ນພັດທະນາ THN ຢາກຖາມວ່າໃນປີ 2018 ຜູ້ທີ່ເຮັດແຜນສຶກສາຄົ້ນຄ້ວາບໍ່ດີ ຫຼື ທີມງານທີ່ປະຕິບັດມີຂໍ້ຈຳກັດ ມັນຈຶ່ງບໍ່ເປັນໄປ

ຕາມແຜນ ແລະ ທີ່ມາປັບໃໝ່ໃນປີ 2019 ເປັນຫຍັງຈຶ່ງມີສະເພາະປໍ້າມາດຕະຖານ STD ກ່ຽວຂ້ອງກັບການທີ່ແຜນບໍ່ສຳເລັດໃນປີ 2018 ຫຼື ບໍ່?;

3. ໃນເລື່ອງຂອງແຜນການຂະຫຍາຍຄຸ່ຄ້າໂຄງການໃນປີ 2019 ບໍ່ເຫັນດ້ວຍກັບຊື່ໂຄງການທີ່ມີຄຳວ່າ PRO+CON ເນື່ອງຈາກວ່າ PRO+CON ເປັນສິ່ງທີ່ຫັກລ້າງກັນໝາຍເຖິງ ຂໍ້ດີ ແລະ ຂໍ້ເສຍ ຄວນຈະໃຊ້ຊື່ອື່ນທີ່ມີຄວາມໝາຍບໍ່ຄ້າຍຄືກັບ PRO+CON ແລະ ຖ້າຫາກມັນຄືກັນຈົນເກີນໄປໃນພາສາອັງກິດມັນຈະບໍ່ເປັນມົງຄຸນ ຄວນຫາຄຳສັບອື່ນມາໃຊ້ແທນ;
4. ຢາກຈະຮູ້ວ່າທ່ານມີວິໄສທັດ ຫຼື ມຸມມອງຈັ່ງໃດກ່ຽວກັບເລື່ອງຂອງຄວາມປອດໄພ ໃນຖານະທີ່ທຸລະກິດຂອງ ບໍລິສັດກ່ຽວກັບເຊື້ອໄຟ ເພາະຂ້າພະເຈົ້າ ໄດ້ເກີດອຸບັດຕິເຫດຕົກລົງທ່ໍທີ່ເປີດຝາໄວ້ໃນປໍ້າຂອງ ປທລ ແລະ ປໍ້ານັ້ນບໍ່ຮັບຜິດຊອບ.

ທ່ານປະທານກອງປະຊຸມ ຕອບຄຳຖາມຂອງຜູ້ຖືຮຸ້ນດັ່ງນີ້:

1. ນິຍາມກ່ຽວກັບປໍ້າ 4 ປະເພດມີດັ່ງນີ້:

- ປໍ້າພລາຕິນຳ PLT ເປັນປໍ້າຂະໜາດໃຫຍ່, ການລົງທຶນຫຼາຍ, ຈະມີໃນຕົວເມືອງໃຫຍ່ໆ, ມີເນື້ອທີ່ທັງໝົດ ປະມານ 60x80 ແມັດ, ມີຕູ້ຈ່າຍທັງໝົດ 6 ຕູ້ ມີ 28 ຫົວຈ່າຍ ໃນປໍ້າຈະມີຮ້ານສະດວກຊື້, ຮ້ານອາຫານ ແລະ ເຄື່ອງດື່ມ, ສູນລ້າງອັດສີດລິດ ແລະ ບໍລິການອື່ນໆ;
- ປໍ້າໂກລ GLD ເປັນບໍລິການຕາມເຂດຊຸມຊົນໃຫຍ່ ແຕ່ມີຂະໜາດເນື້ອທີ່ນ້ອຍກວ່າ ປໍ້າພລາຕິນຳ PLT, ມີເນື້ອທີ່ທັງໝົດປະມານ 50x60 ແມັດ, ມີຕູ້ຈ່າຍທັງໝົດ 4 ຕູ້ ມີ 12 ຫົວຈ່າຍ ໃນປໍ້າຈະມີຮ້ານສະດວກຊື້, ຮ້ານອາຫານ ແລະ ເຄື່ອງດື່ມ, ສູນລ້າງອັດສີດລິດ ແລະ ບໍລິການອື່ນໆ;
- ປໍ້າມາດຕະຖານ STD ຂະໜາດການລົງທຶນປະມານ 3-4 ແສນໂດລາສະຫາລັດ ເປັນປໍ້າທີ່ຕັ້ງຢູ່ຕາມເສັ້ນທາງໃຫຍ່ ຕາມສາຍທາງຫຼວງ ແລະ ໃກ້ເຂດຊຸມຊົນ, ມີເນື້ອທີ່ທັງໝົດປະມານ 40x50 ແມັດຂຶ້ນໄປ, ມີຕູ້ຈ່າຍທັງໝົດ 3 ຕູ້ ມີ 6 ຫົວຈ່າຍ, ເປັນຮູບແບບດັ່ງເດີມຂອງບໍລິສັດ ແລະ ບໍລິການນ້ຳມັນພຽງຢ່າງດຽວ, ມີຫ້ອງນ້ຳສະອາດ ແຕ່ບໍ່ມີຮ້ານຄ້າ ແລະ ບໍລິການເສີມ ແຕ່ໃນອະນາຄົດອີງຕາມສະພາບຕົວຈິງ ຈະມີຮ້ານຄ້າ ແລະ ບໍລິການອື່ນໆ;
- ປໍ້າທ້ອງຖິ່ນພັດທະນາ THN ເປັນປໍ້າຂະໜາດນ້ອຍຕາມເຂດຊຸມຊົນຫ່າງໄກສອກຫຼີກ, ມີຂະໜາດຕັ້ງແຕ່ 15x20 ແມັດຂຶ້ນໄປ, ມີ 1 ຕູ້ ມີ 2 ຫົວຈ່າຍ, ມີຫ້ອງນ້ຳສະອາດ.

2. ແຜນທຸລະກິດປະຈຳປີ 2018 ບໍ່ເປັນໄປຕາມແຜນເພາະວ່າ ເບື້ອງຕົ້ນທີ່ຂຶ້ນແຜນໄປ ລັດຖະບານກຳລັງຄົ້ນຄ້ວາເງື່ອນໄຂເລື່ອງຄຳລັດວ່າດ້ວຍນ້ຳມັນເຊື້ອໄຟ ເລກທີ 331/ນຍ ຍ້ອນການແຂ່ງຂັນການເປີດປໍ້ານ້ຳມັນຂອງ 22 ບໍລິສັດນ້ຳມັນໃນລາວ ໂດຍທີ່ປໍ້າໃກ້ໆກັນ ບໍ່ຮອດ 10 ກິໂລແມັດ ກໍ່ອະນຸຍາດ ດັ່ງນັ້ນ ລັດຖະບານຈຶ່ງອອກແຈ້ງການໃຫ້ຢຸດຕິການຂະຫຍາຍປໍ້າ. ສຳລັບໃນປີ 2019 ບໍລິສັດບໍ່ມີແຜນສ້າງປໍ້າພລາຕິນຳ PLT ແລະ ປໍ້າໂກລ GLD ຍ້ອນວ່າ ພື້ນທີ່ທີ່ຈະສ້າງປໍ້າປະເພດນີ້ມັນເຕັມທຸກຕົວເມືອງ ຖ້າສືບຕໍ່ສ້າງໄປກໍ່ຈະມີປັນຫາເລື່ອງຍອດຂາຍ ສ່ວນປໍ້າທ້ອງຖິ່ນພັດທະນາ THN ກໍ່ບໍ່ຂະຫຍາຍ ຍ້ອນມີບໍລິສັດອື່ນໄປຕັ້ງປໍ້າທີ່ໃຫຍ່ກວ່າໃນເຂດຊຸມຊົນຫມົດແລ້ວ. ການຂຶ້ນແຜນຂະຫຍາຍແຕ່ປໍ້າມາດຕະຖານ STD ຈຳນວນ 16 ປໍ້າ ເພາະມີຄວາມຈຳເປັນໃນຕົວເມືອງຂະໜາດໃຫຍ່ ແລະ ຂະໜາດກາງ ມູນຄ່າການລົງທຶນກໍ່ບໍ່ສູງ ແລະ ຈະມີບໍລິສັດທີ່ຈະຖືກຍຸບໄປຍ້ອນບໍລິສັດນັ້ນບໍ່ສາມາດນຳເຂົ້ານ້ຳມັນມາໂດຍກົງ ເພາະຈະມີບໍລິສັດທີ່ຈະບໍ່ສາມາດນຳເຂົ້ານ້ຳມັນໄດ້ປະມານ 15-16 ບໍລິສັດ ຄິດວ່າໃນຈຳນວນບໍລິສັດທີ່ບໍ່ໄດ້ຮັບສິດນຳເຂົ້ານ້ຳມັນຈະມາຊື້ນ້ຳມັນນຳ ປທລ ເພື່ອໄປຈຳໜ່າຍ

ໃນປ້ຳຍ່ອຍຂອງເຂົາ ແລະ ປ້ຳມາດຕະຖານຫຼາຍປ້ຳຂອງບໍລິສັດອື່ນມີການປິດຕົວໄປ ບໍລິສັດຈະໄປຊື້ປ້ຳຖັ່ງກ່າວ ມາປັບປຸງເປັນຂອງບໍລິສັດເພື່ອປະຢັດຕົ້ນທຶນ.

3. ບໍ່ມີຄຳເຫັນໃນຂໍ້ນີ້;
4. ນະໂຍບາຍເລື່ອງລະບົບຄວາມປອດໄພ ສຸຂະອະນາໄມ ແລະ ສິ່ງແວດລ້ອມ ບໍລິສັດຄຳນຶ່ງມາເປັນອັນດັບໜຶ່ງ ບໍລິສັດໄດ້ຮັບມາດຕະຖານ ISO, ບໍລິສັດຈະເນັ້ນຄວາປອດໄພຂອງ ສາງນ້ຳມັນ, ລະບົບຂົນສົ່ງ, ຫ້ອງການ ແລະ ປ້ຳນ້ຳມັນ ເປັນຫຼັກ. ປ້ຳນ້ຳມັນຈະມີຂອງບໍລິສັດ ແລະ ປ້ຳບໍລິສັດຮ່ວມທຶນກັບລູກຄ້າ ແຕ່ເລື່ອງຄວາມ ປອດໄພໄດ້ໃຫ້ປະຕິບັດມາດຖະຖານດຽວກັນ. ແຕ່ສິ່ງທີ່ທ່ານກ່າວມາບໍລິສັດຈະນຳເອົາເປັນບົດຮຽນ ແລະ ປັບປຸງແກ້ໄຂ.

ເມື່ອບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ ທ່ານ ປະທານ ຈຶ່ງສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງ ແຜນການດຳເນີນທຸລະກິດຂອງ ບໍລິສັດ ປະຈຳປີ 2019.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງ ແຜນການດຳເນີນທຸລະກິດຂອງ ບໍລິສັດ ປະຈຳປີ 2019 ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ 198.511.521 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.511.521 ສຽງ ຄິດເປັນ 100 %.

ວາລະທີ 7. ພິຈາລະນາ ແລະ ຮັບຮອງ ແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ປະຈຳປີ 2019

ທ່ານ ປະທານ ໄດ້ລາຍງານຕໍ່ທີ່ປະຊຸມດັ່ງນີ້: ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ເລກທີ 46/ສພຊ ລົງວັນທີ 26 ທັນວາ 2013 ມາດຕາ 154 ສິດ ແລະ ໜ້າທີ່ຂອງກອງປະຊຸມສາມັນຜູ້ຖືຮຸ້ນ ກຳນົດໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ເປັນຜູ້ເລືອກຕັ້ງຜູ້ກວດສອບບັນຊີ ແລະ ຄ່າຈ້າງຂອງຜູ້ກວດສອບບັນຊີ, ບໍລິສັດໄດ້ເລືອກ ແລະ ແຕ່ງຕັ້ງ ບໍລິສັດ ພຣາຍສ໌ວໍເຕີ້ເຮົ້າສ໌ກຸເປ໊ສ (ລາວ) ຈຳກັດ (PWC) ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດ ປະຈຳປີ 2019 ເນື່ອງ ຈາກເປັນບໍລິສັດທີ່ມີປະສົບການ, ຜູ້ກວດສອບ ແລະ ທີມງານມີຄວາມເຂົ້າໃຈແຈ້ງໃນໜ້າທີ ແລະ ເປັນບໍລິສັດກວດ ສອບບັນຊີທີ່ໄດ້ມາດຕະຖານ ລວມທັງໄດ້ຮັບຄວາມໄວ້ວ່າງໃຈໃນລະດັບສາກົນ. ໂດຍມີຄ່າຈ້າງປະມານ 34.000 ໂດ ລາສະຫະລັດ.

ຕາຕາລາງສະແດງການຈ້າງຜູ້ກວດການບັນຊີພາຍນອກ

ບໍລິສັດ	ປີ	ຄ່າຈ້າງຜູ້ກວດສອບບັນຊີພາຍນອກ (ໂດລາສະຫະລັດ)	ສ່ວນຕ່າງ (ໂດລາສະຫະລັດ)
PWC	2017	55.000	
PWC	2018	55.000	0
PWC	2019	34.000	-21.000

ຫຼັງຈາກທ່ານ ປະທານ ໄດ້ລາຍງານໃນວາລະນີ້ ແລ້ວກໍ່ໄດ້ເປີດໂອກາດຮຽນເຊີນ ຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ໃຫ້ສອບຖາມໄດ້. ມີຜູ້ຖືຮຸ້ນປະກອບຄຳເຫັນດັ່ງນີ້:

Mr. KRAIWAL KADAVANICH ຜູ້ຖືຮຸ້ນມາດ້ວຍຕົນເອງ ປະກອບຄຳເຫັນດັ່ງນີ້:

1. ສ່ວນຕ່າງຄ່າຈ້າງຜູ້ກວດສອບພາຍນອກມູນຄ່າ 21.000 ໂດລາສະຫາລັດ ຄວນໃສ່ເຄື່ອງໝາຍຕິດລົບ (-) ມັນຈະເຮັດໃຫ້ຄວາມໝາຍປ່ຽນ;
2. ໃນອາລະກ່ອນໜ້ານີ້ຫາກໍ່ແຈກເອກະສານລາຍງານການເງິນສະບັບສົມບຸນໃຫ້ຜູ້ຖືຮຸ້ນ ມັນເຮັດໃຫ້ຜູ້ຖືຮຸ້ນບໍ່ມີເວລາສຶກສາ ແລະ ພິຈາລະນາລ່ວງໜ້າ ເພາະຄົນທີ່ມາປະຊຸມ ຫຼື ຄົນທີ່ບໍ່ມາປະຊຸມ ໄດ້ສຶກສາລາຍລະອຽດໃນເອກະສານແລ້ວ. ແລ້ວເກີດການປ່ຽນແປງເຮັດໃຫ້ບໍ່ຍຸດຕິທຳກັບຜູ້ຖືຮຸ້ນທີ່ມາ ແລະ ບໍ່ມາຮ່ວມປະຊຸມ, PWC ຄວນເຮັດສັນຍາລັກ ຫຼື ເນັ້ນໃນສ່ວນທີ່ຕ່າງ ໃຫ້ຜູ້ຖືຮຸ້ນອ່ານງ່າຍຂຶ້ນ ແລະ ບໍ່ຄວນຈະໃຫ້ມີເຫດການແບບນີ້ເກີດຂຶ້ນອີກ ແລະ ຄວນທີ່ຈະເຮັດໃຫ້ເອກະສານສະບັບສົມບຸນແລ້ວຕາມເວລາທີ່ກຳນົດ;
3. PWC ໄດ້ມີການກວດສອບເອກະສານແຈ້ງເຊີນເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນສະບັບທີ່ເປັນພາສາອັງກິດ ບໍ?

ທ່ານປະທານກອງປະຊຸມ ຕອບຄຳຖາມຂອງຜູ້ຖືຮຸ້ນດັ່ງນີ້:

1. ໃຫ້ຄະນະຮັບຜິດຊອບປັບປຸງ ແລະ ແກ້ໄຂ;
2. ການກວດສອບຊ້ຳ ບໍລິສັດກໍ່ມີສ່ວນໃນເລື່ອງຂອງການສົ່ງເອກະສານໃຫ້ PWC ຊ້ຳ;
3. PWC ບໍ່ໄດ້ກວດເອກະສານແຈ້ງເຊີນເຂົ້າຮ່ວມກອງປະຊຸມສາມັນປະຈຳປີ 2019.

ທ່ານ ກ້າ ໄຟດ່ຳງລໍເບຣຍຢາວ ຜູ້ຖືຮຸ້ນມາດ້ວຍຕົນເອງ ປະກອບຄຳເຫັນດັ່ງນີ້:

1. ອີງໃສ່ຫຼັກການ ຜູ້ກວດສອບຈະຕ້ອງປ່ຽນທຸກ 3 ປີ, ເຊິ່ງ PWC ຄົບ 3 ປີແລ້ວ ແລະ ໃນປີໜ້າຍັງສາມາດຈ້າງ PWC ໄດ້ຄືເກົ່າບໍ່ ຫຼື ຕ້ອງເປັນບໍລິສັດໃໝ່.

ທ່ານປະທານກອງປະຊຸມ ຕອບຄຳຖາມຂອງຜູ້ຖືຮຸ້ນດັ່ງນີ້:

1. ສຳລັບການເລືອກຜູ້ກວດສອບຕ້ອງເປັນໄປຕາມຫຼັກການ 3 ປີ ຕ້ອງໄດ້ປ່ຽນໃໝ່. ຍັງມີບໍລິສັດກວດສອບອີກຫຼາຍບໍລິສັດທີ່ໄດ້ມາດຕະຖານຕາມລະບຽບສຳນັກງານຄຸມຄ້ອງຫຼັກຊັບຮັບຮອງເຊັ່ນ: EY, KPMG ແລະ Deloitte.

ເມື່ອບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ ທ່ານ ປະທານ ຈຶ່ງສະເໜີໃຫ້ກອງປະຊຸມ ພິຈາລະນາ ແລະ ຮັບຮອງ ແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ປະຈຳປີ 2019.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງ ແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ປະຈຳປີ 2019 ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ 198.511.521 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.511.521 ສຽງ ຄິດເປັນ 100 %.

ວາລະທີ 8. ພິຈາລະນາ ຮັບຮອງຕໍ່ອາຍຸການຂອງ ສະມາຊິກສະພາບໍລິຫານ ແລະ ສະມາຊິກຄະນະກວດສອບອິດສະລະ ຊຸດປະຈຸບັນອີກໜຶ່ງສະໄໝ ແລະ ການປັບຕຳແໜ່ງພາຍໃນສະພາບໍລິຫານ

ທ່ານ ປະທານ ໄດ້ລາຍງານຕໍ່ທີ່ປະຊຸມດັ່ງນີ້: ອີງຕາມຂໍ້ຕົກລົງ ວ່າດ້ວຍສະພາບໍລິຫານຂອງບໍລິສັດຈົດທະບຽນ ສະບັບເລກທີ 0024/ຄຄຊ, ລົງວັນທີ 26 ຕຸລາ 2016 ມາດຕາ 13 ສະມາຊິກສະພາບໍລິຫານ ມີອາຍຸການ 2 ປີ ແລະ ສະພາບໍລິຫານຊຸດປັດຈຸບັນໃກ້ຈະຄົບອາຍຸການ ດັ່ງນັ້ນ, ຈຶ່ງສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນຕໍ່ອາຍຸສະພາບໍລິຫານຊຸດເກົ່າ ອີກ 01 ສະໄໝ ແລະ ປັບບາງຕຳແໜ່ງພາຍໃນສະພາບໍລິຫານ, ມີລາຍລະອຽດ ດັ່ງລຸ່ມນີ້:

<u>ສະພາບໍລິຫານຊຸດເກົ່າ</u>:

1. ທ່ານ ຈັນທອນ ສິດທິໄຊ	: ປະທານສະພາບໍລິຫານ;
2. ທ່ານ ນາງ ສະຫວັນທອງ ພົງສະຫວັນ	: ຮອງປະທານສະພາບໍລິຫານ;
3. ທ່ານ ນາງ ດາລີ ພົນເສນາ	: ສະມາຊິກສະພາບໍລິຫານອິດສະລະ, ປະທານຄະນະກຳມະການກວດສອບຄວາມສ່ຽງພາຍໃນ;
4. ທ່ານ ໝຸພັນ ມະຫາວົງ	: ສະມາຊິກສະພາບໍລິຫານອິດສະລະ; ຄະນະກຳມະການກວດສອບຄວາມສ່ຽງພາຍໃນ;
5. ທ່ານ ໂພໄຊ ຈັນທະວົງສາ	: ສະມາຊິກສະພາບໍລິຫານອິດສະລະ; ຄະນະກຳມະການກວດສອບຄວາມສ່ຽງພາຍໃນ;
6. ທ່ານ ນາງ ຈັນທະດອມ ເມກສະຫ້ອນ	: ສະມາຊິກສະພາບໍລິຫານ;
7. ທ່ານ ບຸນຖົມ ຈິດຕະວົງ	: ສະມາຊິກສະພາບໍລິຫານ.

<u>ສະພາບໍລິຫານຊຸດໃໝ່ ແລະ ການປັບປ່ຽນບາງຕຳແໜ່ງພາຍໃນສະພາບໍລິຫານ</u>:

2. ທ່ານ ຈັນທອນ ສິດທິໄຊ	: ປະທານສະພາບໍລິຫານ / ວ່າການຜູ້ອຳນວຍການໃຫຍ່;
3. ທ່ານ ນາງ ສະຫວັນທອງ ພົງສະຫວັນ	: ຮອງປະທານສະພາບໍລິຫານ;
4. ທ່ານ ນາງ ຈັນທະດອມ ເມກສະຫວັນ	: ຮອງປະທານສະພາບໍລິຫານ;
5. ທ່ານ ນາງ ດາລີ ພົນເສນາ	: ປະທານຄະນະກຳມະການກວດສອບຄວາມສ່ຽງພາຍໃນ / ສະມາຊິກສະພາບໍລິຫານອິດສະລະ;
6. ທ່ານ ໝຸພັນ ມະຫາວົງ	: ຄະນະກຳມະການກວດສອບຄວາມສ່ຽງພາຍໃນ / ສະມາຊິກສະພາບໍລິຫາອິດສະລະ;
7. ທ່ານ ໂພໄຊ ຈັນທະວົງສາ	: ປະທານຄະນະກຳມະການກວດສອບພາຍໃນ / ສະມາຊິກສະພາບໍລິຫານອິດສະລະ; ແລະ
8. ທ່ານ ບຸນຖົມ ຈິດຕະວົງ	: ສະມາຊິກສະພາບໍລິຫານ.

ຫຼັງຈາກທ່ານ ປະທານ ໄດ້ລາຍງານໃນວາລະນີ້ ແລ້ວກໍ່ໄດ້ເປີດໂອກາດຮຽນເຊີນ ຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ໃຫ້ສອບຖາມໄດ້. ມີຜູ້ຖືຮຸ້ນປະກອບຄຳເຫັນດັ່ງນີ້:

ທ່ານ ກ້າ ໄຟດ່ວງລໍເບຣຍຢາວ ຜູ້ຖືຮຸ້ນມາດ້ວຍຕົນເອງ ປະກອບຄຳເຫັນດັ່ງນີ້:

1. ຢາກໃຫ້ປັບປຸງເອກະສານຊີ້ຈະປະຫວັດຫຍໍ້ຂອງສະມາຊິກສະພາບໍລິຫານໃຫ້ຖືກຕ້ອງເພາະມີບາງຄຳຂຽນຜິດ ເຊັ່ນ: ວິທະຍາໄລແຫ່ງຊາດ ແລະ ຢາກໃຫ້ແບບຟອມຊີ້ຈະປະຫວັດຂອງສະມາຊິກສະພາບໍລິຫານແຕ່ລະທ່ານ ຄືກັນ ເພາະມີບາງທ່ານບໍ່ຄືກັນ ແລະ ມີບາງທ່ານຕື່ມຂໍ້ມູນໃສ່ບໍ່ຄົບຖ້ວນ.

ທ່ານປະທານກອງປະຊຸມ ຕອບຄຳຖາມຂອງຜູ້ຖືຮຸ້ນດັ່ງນີ້:

1. ມອບໃຫ້ຄະນະຮັບຜິດຊອບປັບປຸງ ແລະ ແກ້ໄຂ.

ເມື່ອບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ ທ່ານ ປະທານ ຈຶ່ງສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງຕໍ່ອາຍຸການຂອງ ສະມາຊິກສະພາບໍລິຫານ ແລະ ສະມາຊິກຄະນະກວດສອບອິດສະລະຊຸດປະຈຸບັນອີກໜຶ່ງສະໄໝ ແລະ ການປັບຕຳແໜ່ງພາຍໃນສະພາບໍລິຫານ.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງ ຕໍ່ອາຍຸການຂອງ ສະມາຊິກສະພາບໍລິຫານ ແລະ ສະມາຊິກຄະນະກວດສອບອິດສະລະຊຸດປະຈຸບັນອີກໜຶ່ງສະໄໝ ແລະ ການປັບຕຳແໜ່ງພາຍໃນສະພາບໍລິຫານ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ 198.511.521 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.511.521 ສຽງ ຄິດເປັນ 100 %.

ວາລະທີ 9. ຮັບຮອງເອົາ ການໃຫ້ສິດແກ່ສະພາບໍລິຫານ ໃນການພິຈາລະນາການຈ່າຍເງິນປັນຜົນລະຫວ່າງປີ 2019 ຖ້າຫາກບໍລິສັດມີຜົນກຳໄລຈາກການດຳເນີນງານທຸລະກິດ

ທ່ານ ປະທານ ໄດ້ລາຍງານຕໍ່ທີ່ປະຊຸມດັ່ງນີ້: ໃນໄລຍະລະຫວ່າງປີ 2019 ບໍລິສັດ ອາດບໍ່ມີວາລະອື່ນທີ່ຕ້ອງ ອະນຸມັດຈາກກອງປະຊຸມຜູ້ຖືຮຸ້ນ ນອກຈາກວາລະການຈ່າຍເງິນປັນຜົນລະຫວ່າງປີ 2019 ແລະ ອີງຕາມກົດໝາຍວ່າ ດ້ວຍວິສາຫະກິດ ເລກທີ 46/ສພຊ ມາດຕາ 155 " ຫ້າມບໍ່ໃຫ້ບໍລິສັດ ຈ່າຍເງິນປັນຜົນເມື່ອບໍລິສັດຍັງມີເງິນຂາດທຶນ ຢ່າງຕໍ່ເນື່ອງໃນຊຸມປີຜ່ານມາ".

ຫຼັງຈາກທ່ານ ປະທານ ໄດ້ລາຍງານໃນວາລະນີ້ແລ້ວ ກໍໄດ້ເປີດໂອກາດຮຽນເຊີນ ຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ໃຫ້ສອບຖາມໄດ້.

ເມື່ອບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ ທ່ານ ປະທານ ຈຶ່ງສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງການ ໃຫ້ສິດແກ່ສະພາບໍລິຫານ ໃນການພິຈາລະນາການຈ່າຍເງິນປັນຜົນລະຫວ່າງປີ 2019 ຖ້າຫາກບໍລິສັດມີຜົນກຳໄລຈາກ ການດຳເນີນງານທຸລະກິດ.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງ ການໃຫ້ສິດແກ່ສະພາບໍລິຫານ ໃນການພິຈາລະນາການຈ່າຍເງິນປັນຜົນລະຫວ່າງປີ 2019 ຖ້າຫາກບໍລິສັດມີຜົນກຳໄລຈາກການດຳເນີນງານທຸລະກິດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະ ຊຸມດັ່ງນີ້:

- ເຫັນດີ 198.511.521 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.511.521 ສຽງ ຄິດເປັນ 100 %.

ກອງປະຊຸມໄດ້ດຳເນີນຄົບທຸກວາລະແລ້ວ ປະທານກອງປະຊຸມໄດ້ສະເໜີໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນຕື່ມ ແລະ ມີຜູ້ຖືຮຸ້ນປະກອບຄຳເຫັນດັ່ງນີ້:

Mr. KRAIWAL KADAVANICH ຜູ້ຖືຮຸ້ນມາດ້ວຍຕົນເອງ ປະກອບຄຳເຫັນດັ່ງນີ້:

1. ຊີປະປະຫວັດຂອງສະມາຊິກສະພາບໍລິຫານນ່າຈະເປັນສະບັບທີ່ເຮັດຍັງບໍ່ແລ້ວເພາະຍັງມີທີ່ຫວ່າງໄວ້ໃຫ້ຕື່ມ;
2. ໝາຍເຫດໃນເອກະສານເຊີນປະຊຸມ ເບີໂທລະສັບ ແລະ ເບີແຟັກ ເປັນເບີຄຽງກັນ ເຊິ່ງບໍ່ຖືກຕ້ອງ;
3. ເອກະສານເຊີນທີ່ພິມແຈກຜູ້ຖືຮຸ້ນຄວນໃຫ້ເຮັດເປັນຫົວ ແລະ ແຕ່ລະໃບຄວນມີ 2 ໜ້າ.

ທ່ານປະທານກອງປະຊຸມ ຕອບຄຳຖາມຂອງຜູ້ຖືຮຸ້ນວ່າ: ມອບໃຫ້ຄະນະຮັບຜິດຊອບປັບປຸງ ແລະ ແກ້ໄຂ ໃນເອກະສານເຊີນປະຊຸມຄັ້ງຕໍ່ໄປ.

ໃນຕອນທ້າຍຂອງກອງປະຊຸມ ປະທານກອງປະຊຸມ ໄດ້ກ່າວຂອບໃຈບັນດາຜູ້ຖືຮຸ້ນທຸກທ່ານ ທີ່ມາຮ່ວມປະຊຸມໃນມື້ນີ້ ຂໍອວຍພອນໄຊແກ່ບັນດາທ່ານ ຈົ່ງມີສຸຂະພາບເຂັ້ມແຂງ ປະສົບຜົນສຳເລັດໃນໜ້າທີ່ວຽກງານ ຂໍໃຫ້ມີຄວາມສຸກໃນຊີວິດຄອບຄົວ.

ທີ່ປະຊຸມຜູ້ຖືຮຸ້ນບໍ່ມີຂໍ້ພິຈາລະນາອື່ນໆຕື່ມອີກ ດັ່ງນັ້ນ, ປະທານກອງປະຊຸມ ຈຶ່ງກ່າວປິດກອງປະຊຸມເວລາ 12:05 ໂມງ.

ດ້ວຍຄວາມເຄົາລົບ ແລະ ນັບຖື,

ປະທານສະພາບໍລິຫານ

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ.

ໝາຍເຫດ: ບົດບັນທຶກກອງປະຊຸມຜູ້ຖືຮຸ້ນປະຈຳປີ 2018 ໃຫ້ຖືເອົາສະບັບພາສາລາວເປັນຫຼັກ.

ໂພໄຊ ຈັນທະວົງສາ
Phoxay CHANTHAVONGSA

ຮ່າງເອກະສານລາຍງານການເງິນ ປະຈຳປີ 2019

Petroleum Trading Lao Public Company and its subsidiaries
Consolidated statement of financial position
As at 31 December 2019

	Notes	31 December 2019 LAK	31 December 2018 LAK
Assets			
Current assets			
Cash and cash equivalents	4	7,436,128,462	12,515,355,962
Trade receivables, net	5	124,854,782,269	113,542,704,386
Inventories, net	6	24,695,863,078	16,522,614,854
Short-term loan to related parties	20.5	34,433,275,626	19,094,118,588
Other current assets	7	92,766,304,739	56,999,775,130
Non-current assets classified as held-for-sale	11	-	-
Total current assets		**284,186,354,174**	**218,674,568,920**
Non-current assets			
Property, plant and equipment, net	8	327,777,992,137	345,402,928,369
Intangible assets, net	9	6,258,728,410	7,336,408,537
Investment properties, net	10	86,509,152,307	87,547,072,916
Long-term loans to related parties	20.5	-	17,312,564,683
Other non-current assets	12	46,916,366,911	45,996,195,879
Total non-current assets		**467,462,239,765**	**503,595,170,384**
Total assets		**751,648,593,939**	**722,269,739,304**

Chanthone Sitthixay
Chief Executive Officer

Date: XX April 2020

Chanthadom Meksavanh
Acting Chief Finance Officer

Date: XX April 2020

The accompanying notes on page 11 to 21 are an integral part of these consolidated financial information.

Petroleum Trading Lao Public Company and its subsidiaries
Consolidated statement of financial position
As at 31 December 2019

	Notes	31 December 2019 LAK	31 December 2018 LAK
Liabilities and equity			
Liabilities			
Current liabilities			
Trade payables	13	116,317,493,425	66,682,803,047
Tax payables	14	16,211,129,195	4,287,040,765
Short-term borrowings	15	95,367,600,000	272,970,740,000
Other current liabilities	16	26,685,191,742	32,357,726,680
Total current liabilities		**254,581,414,362**	**376,298,310,492**
Non-current liabilities			
Long-term borrowings	15	265,588,000,000	33,480,000,000
Total non-current liabilities		**265,588,000,000**	**33,480,000,000**
Total liabilities		**520,169,414,362**	**409,778,310,492**
Equity			
Share capital	17	470,000,000,000	470,000,000,000
Share premium		27,638,932,340	27,638,932,340
Common control reserve		(898,908,935)	(898,908,935)
Translation		-	544,522,558
Accumulated loss			
Appropriated-legal reserve		3,708,530,711	3,708,530,711
Other reserve		1,977,267,980	1,977,267,979
Unappropriated		(272,941,805,595)	(192,505,936,248)
Equity attributble to owners of the parent		**229,484,016,501**	**310,464,408,405**
Non-controlling interest		1,995,163,076	2,027,020,407
Total equity		**231,479,179,577**	**312,491,428,812**
Total liabilities and equity		**751,648,593,939**	**722,269,739,304**

Chanthone Sitthixay
Chief Executive Officer

Date: XX April 2020

Chanthadom Meksavanh
Acting Chief Finance Officer

Date: XX April 2020

Petroleum Trading Lao Public Company and its subsidiaries
Consolidated statement of income
For the year ended 31 December 2019

	Notes	31 December 2019 LAK	31 December 2018 LAK
Sales		1,271,935,934,055	1,135,676,499,880
Cost of sales		(1,191,165,594,523)	(1,088,368,654,796)
Gross profit		**80,770,339,532**	**47,307,845,084**
Other incomes		6,443,866,820	8,298,252,147
Other gain(loss), net		(28,186,140,578)	(11,737,574,245)
Selling expenses		(18,440,996,630)	(20,132,046,845)
Administrative expenses		(90,279,469,348)	(62,372,359,317)
Operating loss		**(49,692,400,204)**	**(38,635,883,176)**
Finance expense		(29,106,991,445)	(26,190,973,557)
Net loss before income tax expenses		**(78,799,391,649)**	**(64,826,856,733)**
Income tax expenses	18	(1,041,661,195)	(828,167,783)
Net loss for the year		**(79,841,052,844)**	**(65,655,024,516)**
Loss attributable to :			
Owners of the parent		(79,891,346,789)	(65,569,754,328)
Non- Controlling interest		50,293,945	(85,270,188)
		(79,841,052,844)	**(65,655,024,516)**
Earnings (loss) per share			
Basic earnings (loss) per share	19	(340)	(279)

Chanthone Sitthixay
Chief Executive Officer

Date: XX April 2020

Chanthadom Meksavanh
Acting Chief Finance Officer

Date: XX April 2020

The accompanying notes on page 11 to 21 are an integral part of these consolidated financial information.



ຊີວະປະຫວັດຫຍໍ້ສະມາຊິກອິດສະຫຼະ

I. ຂໍ້ມູນສ່ວນຕົວ

ຊື່ ແລະ ນາມສະກຸນ: ນາງ ດາລີ ພົນເສນາ
ສັນຊາດ: ລາວ, ເຊື້ອຊາດ: ລາວ
ວັນເດືອນປີເກີດ: 13 ຕຸລາ 1955
ບ່ອນເກີດ: ບ້ານ ຫຼວງຂອນ, ເມືອງ ນໍ້າທາ, ແຂວງ ຫຼວງນໍ້າທາ
ອາຊີບ: ພະນັກງານ
ບ່ອນເຮັດວຽກ: ທະນາຄານ ພົງສະຫວັນ
ຕໍາແໜ່ງ: ສະມາຊິກສະພາບໍລິຫານ
ທີ່ຢູ່ປະຈຸບັນ: ບ້ານ ໂພນໄຊ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ
ໂທລະສັບ: 020 22225326

II. ປະຫວັດການສຶກສາ ແລະ ການຝຶກອົບຮົມ

1. ລະດັບການສຶກສາ:

√ **ຊັ້ນສູງ**

- ຫົວຂໍ້ວິຊາ: ການທະນາຄານ
- ຊື່ ແລະ ທີ່ຢູ່ຂອງໂຮງຮຽນ: ຮ່າໂນ້ຍ, ສ.ສ. ຫວຽດນາມ
- ໄລຍະເວລາ: 1971 – 1974
- ຫົວຂໍ້ວິຊາ: ທິດສະດີການເມືອງ ແລະ ການປົກຄອງ
- ຊື່ ແລະ ທີ່ຢູ່ຂອງໂຮງຮຽນ: ສະຖາບັນການເມືອງ ແລະ ການປົກຄອງ

√ **ປະລິນຍາຕີ**

- ຫົວຂໍ້ວິຊາ: ອັກສອນສາດ.
- ຊື່ ແລະ ທີ່ຢູ່ຂອງໂຮງຮຽນ: ມະຫາວິທະຍາໄລແຫ່ງຊາດລາວ.
- ໄລຍະເວລາ: 1998 – 2002.

√ **ປະລິນຍາໂທ**

- ຫົວຂໍ້ວິຊາ: ການບໍລິຫານລັດ (Master of Public Administration)
- ຊື່ແລະທີ່ຢູ່ຂອງໂຮງຮຽນ: ມະຫາວິທະຍາໄລຊຽງໃໝ່, ປະເທດໄທ
- ໄລຍະເວລາ: 2005 – 2006.

2. ເຂົ້າຮ່ວມການຝຶກອົບຮົມຫົວຂໍ້ກ່ຽວກັບການເງິນ-ການທະນາຄານ ຫຼື ອື່ນໆທີ່ກ່ຽວຂ້ອງ:

ລ/ດ	ຫົວຂໍ້ການຝຶກອົບຮົມ	ຈັດຝຶກອົບຮົມໂດຍ	ວັນທີ ແລະ ໄລຍະເວລາການເຂົ້າຮ່ວມ
1	ການທະນາຄານ	ທະນາຄານແຫ່ງປະເທດໄທ	ເດືອນ 02-04/1992
2	ຜູ້ບໍລິຫານທະນາຄານ	ທະນາຄານພັດທະນາອາຊີ, ນະຄອນຫຼວງ	10/1993-04/1994
3	ຜູ້ບໍລິຫານທະນາຄານ	ທະນາຄານແຫ່ງປະເທດໄທ	09/1994
4	ການຕະຫຼາດ	ກອງທຶນສາກົນ (IMF), Austria	03/1995
5	ການບໍລິຫານທຸລະກິດ	ທະນາຄານແຫ່ງປະເທດໄທ	08-12/1995
6	ການຄຸ້ມຄອງເງິນຕາຕ່າງປະເທດ	ກອງທຶນສາກົນ (IMF), Austria	07/1996
7	ນະໂຍບາຍເງິນຕາ	ກອງທຶນສາກົນ (IMF), ຍີ່ປຸ່ນ	10/1996
8	ການບໍລິຫານທະນາຄານທຸລະກິດ	ສິງກະໂປ	09/1997
9	ພາສາອັງກິດ	ລັດຖະບານນິວຊີແລນ	11/1997-11/1998
10	ມາດຕະຖານການບັນຊີ	ກອງທຶນສາກົນ (IMF), Austria	04/1997
11	ເສດຖະສາດມະຫາພາກ	ກອງທຶນສາກົນ (IMF) ແລະ ອົງການ JCIF, ຍີ່ປຸ່ນ	10/1999
12	ນະໂຍບາຍເງິນຕາ	ທະນາຄານແຫ່ງລັດສສ ຫວຽດນາມ, ສສ ຫວຽດນາມ	12/1999
13	ເສດຖະສາດມະຫາພາກ	ກອງທຶນສາກົນ (IMF), ສິງກະໂປ	05/2001
14	ເສດຖະສາດມະຫາພາກ	ກອງທຶນສາກົນ (IMF), ຍີ່ປຸ່ນ	02/2002
15	ການຄຸ້ມຄອງເສດຖະກິດ	ທະນາຄານກາງລຸກຊຳບົວ, ລຸກຊຳບົວ	03/2003
16	ມາດຕະຖານການບັນຊີ	ທະນາຄານ ADB, ສສ ຫວຽດນາມ	07/2004
17	ກວດສອບບັນຊີ	ກອງທຶນສາກົນ (IMF), ສິງກະໂປ	01/2005
18	ເສດຖະສາດມະຫາພາກ	ກອງທຶນສາກົນ (IMF), ຍີ່ປຸ່ນ	03/2005
19	ນະໂຍບາຍເງິນຕາ	ທະນາຄານກາງ ແລະ JCIF, ສປ ຈີນ	08/2007
20	ຕະຫຼາດຫຼັກຊັບ	ທະນາຄານແຫ່ງລັດ ສສ ຫວຽດນາມ, ສສ ຫວຽດນາມ	09/2007
21	ຕະຫຼາດຫຼັກຊັບ	ຕະຫຼາດຫຼັກຊັບ ສ. ເກົາຫຼີ, ປະເທດ ເກົາຫຼີ	09/2007
22	ຕະຫຼາດຫຼັກຊັບ	ຕະຫຼາດຫຼັກຊັບໄທ, ປະເທດໄທ	10/2007
23	ການຄຸ້ມຄອງເສດຖະກິດ	ທະນາຄານພັດທະນາຈີນ, ສປ ຈີນ	11/2008
24	ນະໂຍບາຍຄຸ້ມຄອງລັດ	ທະນາຄານ ADB, ຍີ່ປຸ່ນ	04/2009
25	ວິຊາຊີບທຸລະກິດຫຼັກຊັບ	ຕະຫຼາດຫຼັກຊັບໄທ, ປະເທດໄທ	07/2009

3. ປະຫວັດການເຮັດວຽກ:

ລ/ດ	ບ່ອນເຮັດວຽກ	ຕຳແໜ່ງ ແລະ ໜ້າທີ່ຮັບຜິດຊອບ	ໄລຍະເວລາ
1	ທະນາຄານແຫ່ງ ສປປ ລາວ	ຫົວໜ້າກົມບັນຊີ	1976 – 1979
2	ທະນາຄານພິເສດ, ນະຄອນຫຼວງ	ຜູ້ອຳນວຍການ	1980 – 1983
3	ທະນາຄານແຫ່ງ ສປປ ລາວ	ຫົວໜ້າກົມກວດກາ	1984 – 1989
4	ທະນາຄານແຫ່ງ ສປປ ລາວ	ຫົວໜ້າກົມບໍລິການທະນາຄານ	1989 – 1997
5	ທະນາຄານແຫ່ງ ສປປ ລາວ	ຫົວໜ້າກົມບັນຊີ	1998 -2004
6	ທະນາຄານແຫ່ງ ສປປ ລາວ	ຫົວໜ້າກົມນະໂຍບາຍເງິນຕາ	2007 – 06/2010
7	ທະນາຄານແຫ່ງ ສປປ ລາວ	ຜູ້ຊ່ວຍຜູ້ວ່າການ	06/2010 – 06/2011



ຊີວະປະຫວັດຫຍໍ້ສະມາຊິກອິດສະຫຼະ

I. ຂໍ້ມູນສ່ວນຕົວ

ຊື່ ແລະ ນາມສະກຸນ: ທ. ໜູພັນ ມະຫາພົນ
ສັນຊາດ: ລາວ, ເຊື້ອຊາດ: ລາວ
ວັນເດືອນປີເກີດ: 11 ຕຸລາ 1950
ບ່ອນເກີດ: ບ້ານ ດອນກອຍ, ເມືອງ ມູນລະປະໂມກ, ແຂວງ ຈຳປາສັກ
ອາຊີບ: ພະນັກງານບຳນານ ແລະ ເປັນທີ່ປຶກສາ
ບ່ອນເຮັດວຽກ: ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ
ຕຳແໜ່ງ: ທີ່ປຶກສາກົດໝາຍ
ທີ່ຢູ່ປະຈຸບັນ: ບ້ານ ໂນນຄ້ໍໃຕ້, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ
ໂທລະສັບ: 020 53801563

II. ປະຫວັດການສຶກສາ ແລະ ການຝຶກອົບຮົມ

1. ລະດັບການສຶກສາ:

√ **ປະລິນຍາຕີ**
- ຫົວຂໍ້ວິຊາ: ສາຂາກົດໝາຍ
- ຊື່ ແລະ ທີ່ຢູ່ຂອງໂຮງຮຽນ: ສະຖາບັນການປົກຄອງ

√ **ປະລິນຍາໂທ**
- ຫົວຂໍ້ວິຊາ: ສາຂາ ກົດໝາຍ
- ຊື່ແລະທີ່ຢູ່ຂອງໂຮງຮຽນ: ທີ່ເມືອງ Kiev, ອາດີດ ສສສ. ໂຊວຽດ
- ໄລຍະເວລາ: ປີ 1984

2. ປະຫວັດການເຮັດວຽກ:

ລ/ດ	ບ່ອນເຮັດວຽກ	ຕຳແໜ່ງ ແລະ ໜ້າທີ່ຮັບຜິດຊອບ	ໄລຍະເວລາ
1	ອົງການຄຸ້ມຄອງທີ່ດິນແຫ່ງຊາດ	—	2009 -2011
2	ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ	—	2011 – 2014
3	ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ	ຮັບບຳນານ ແລະ ເປັນທີ່ປຶກສາກົດໝາຍ	2014 ເປັນຕົ້ນມາ



ຊີວະປະຫວັດຫຍໍ້ສະມາຊິກອິດສະຫຼະ

I. ຂໍ້ມູນສ່ວນຕົວ

ຊື່ ແລະ ນາມສະກຸນ: ທ. ໂພໄຊ ຈັນທະວົງສາ
ສັນຊາດ: ລາວ, ເຊື້ອຊາດ: ລາວ
ວັນເດືອນປີເກີດ: 11 ທັນວາ 1971
ບ່ອນເກີດ: ບ້ານ ໂພນຊາຍ, ເມືອງ ໄກສອນພົມວິຫານ, ແຂວງ ສະຫວັນນະເຂດ
ອາຊີບ: ພະນັກງານບັນຊີ-ການເງິນ
ບ່ອນເຮັດວຽກ: ບໍລິສັດ ຂວັນໃຈ ການຄ້າ ຂາເຂົ້າ-ອອກ ຈຳກັດ
ຕຳແໜ່ງ: ຜູອຳນວຍການຝ່າຍບັນຊີການເງິນ
ທີ່ຢູ່ປະຈຸບັນ: ບ້ານ ໜອງທາເໜືອ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ
ໂທລະສັບ: 020 55558945

II. ປະຫວັດການສຶກສາ ແລະ ການຝຶກອົບຮົມ

1. ລະດັບການສຶກສາ:

√ **ຊັ້ນສູງ**

❖ ຫົວຂໍ້ວິຊາ: ການບັນຊີ
- ຊື່ ແລະ ທີ່ຢູ່ຂອງໂຮງຮຽນ: ວິທະຍາໄລ ເຕັກນິກປາກປ່າສັກ
- ໄລຍະເວລາ: 02 ປີ

❖ ຫົວຂໍ້ວິຊາ: ທິດສະດີການເມືອງການປົກຄອງ
- ຊື່ ແລະ ທີ່ຢູ່ຂອງໂຮງຮຽນ: ສະຖາບັນການເມືອງ-ການປົກຄອງແຫ່ງຊາດ (ທ່າງ່ອນ)
- ໄລຍະເວລາ: 05 ເດືອນ (ລະບົບຊັ້ນສູງເລັ່ງລັດ, ລຸ້ນທີ 9)

√ **ປະລິນຍາຕີ**

- ຫົວຂໍ້ວິຊາ: ການບັນຊີ
- ຊື່ ແລະ ທີ່ຢູ່ຂອງໂຮງຮຽນ: ວິທະຍາໄລ ສະຫວັນ ບໍລິຫານທຸລະກິດ, ສະຫວັນນະເຂດ
- ໄລຍະເວລາ: 04 ປີ

√ **ປະລິນຍາໂທ**

- ຫົວຂໍ້ວິຊາ: ການບັນຊີ
- ຊື່ແລະທີ່ຢູ່ຂອງໂຮງຮຽນ: ມະຫາວິທະຍາໄລແຫ່ງຊາດ
- ໄລຍະເວລາ: 02 ປີ

√ **ອື່ນໆ:**

- ปะกาสะนิยะบัด นายหน้าซื้-ขายหลักซับ, ตะหลาดหลักซับลาอ, ปี 2014
- ปะกาสะนิยะบัด ที่ปึกสาบันชี (Lao CPA), ฉูดที่ 2, ปี 1997

2. ເຂົ້າຮ່ວມການຝຶກອົບຮົມຫົວຂໍ້ກ່ຽວກັບການເງິນ-ການທະນາຄານ ຫຼື ອື່ນໆທີ່ກ່ຽວຂ້ອງ:

ລ/ດ	ຫົວຂໍ້ການຝຶກອົບຮົມ	ຈັດຝຶກອົບຮົມໂດຍ	ວັນທີ ແລະ ໄລຍະເວລາການເຂົ້າຮ່ວມ
1	ວິທະຍາກອນ (Train the trainers “ Certificate of Accomplishment”), ປີ 2014.	ຕະຫຼາດຫຼັກຊັບແຫ່ງ ປະເທດລາວ ແລະ ໄທ.	20-21 ກັນຍາ 2014 (2 ວັນ)
2	ນັກບັນຊີທີ່ໄດ້ຮັບອະນຸຍາດປະເທດອົດສະຕຣາລີ, ລົງເລິກຮຽນວິຊາການລາຍງານການເງິນ, ການບັນຊີຄຸ້ມຄອງ, ກົດຈັນຍາບັນ ແລະ ການຄຸ້ມຄອງ ແລະ ຍຸດທະສາດໃນການບໍລິຫານ.	CPA Australia	26 ກໍລະກົດ ຫາ 4 ພະຈິກ 2010 (3 ເດືອນ)
3	ຝຶກອົບຮົມພາສາອັງກິດ 500 ຊົ່ວໂມງ	ສະຖາບັນການຕ່າງປະເທດ, ກະຊວງການຕ່າງປະເທດ.	11 ກໍລະກົດ ຫາ 14 ທັນວາ 2005 (6 ເດືອນ)
4	ຝຶກອົບຮົມວຽກງານກວດກາບັນຊີວິສາຫະກິດ	ກົມສ່ວຍສາອາກອນ ສສ ຫວຽດນາມ ແລະ ສປປລາວ	5-9 ກັນຍາ 2011 (5 ວັນ)
5	ຝຶກອົບຮົມລະບົບຂໍ້ມູນຂ່າວສານ	ບາງກອກ, ປະເທດໄທ	24-28 ກໍລະກົດ 2006 (5 ວັນ)
6	ຝຶກອົບຮົມການຈັດຕັ້ງປະຕິບັດມາດຕະ ຖານສາກົນ ດ້ານການລາຍງານການເງິນ IFRSs	ອົງການວິຊາຊີບອິນໂດເນເຊຍ	28-31 ພຶດສະພາ 2006 (3 ວັນ)
7	ຝຶກອົບຮົມມາດຕະຖານລາວດ້ານການກວດສອບ	ກະຊວງການເງິນ ສປປລາວ	7-9 ກຸມພາ 2006 (3 ວັນ)

3. ປະຫວັດການເຮັດວຽກ:

ລ/ດ	ບ່ອນເຮັດວຽກ	ຕຳແໜ່ງ ແລະ ໜ້າທີ່ຮັບຜິດຊອບ	ໄລຍະເວລາ
1	ກະຊວງການເງິນ	ພະນັກງານກົມບັນຊີ	1993-1999
2	ກະຊວງການເງິນ	ຫົວໜ້າພະແນກບັນຊີວະສາຫະກິດ	2000-2002
3	ກະຊວງການເງິນ	ຮອງຫົວໜ້າພະແນກສ່ວຍສາອາກອນ	2003-2005
4	ກະຊວງການເງິນ	ຫົວໜ້າພະແນກບັນຊີວະສາຫະກິດ	2006-2007
5	ກະຊວງການເງິນ	ຮອງຫົວໜ້າກົມບັນຊີ	2007-2012
6		ສະເໜີຮັບນະໂຍບາຍບຳເນັດ	ເດືອນຕຸລາ 2012
7	ບໍລິສັດຂວັນໃຈການຄ້າ ຂາເຂົ້າ-	ຜູ້ອຳນວຍການຝ່າຍບັນຊີ-ການເງິນ	2012-2014

	ຂາອອກ ຈຳກັດ		
8	ບໍລິສັດ ປີໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ	ຜູ້ອຳນວຍການຝ່າຍກວດສອບພາຍໃນ ແລະ ສະມາຊິກສະພາບໍລິຫານ	2014-2017
9	ບໍລິສັດຂວັນໃຈການຄ້າ ຂາເຂົ້າ-ຂາອອກ ຈຳກັດ	ຜູ້ອຳນວຍການຝ່າຍບັນຊີ-ການເງິນ	ເດືອນມັງກອນ 2018- ປະຈຸບັນ

4. ປະຫວັດການສຶດສອນ:

ລ/ດ	ວິຊາ	ສະຖາບັນ/ວິທະຍາໄລ	ໄລຍະເວລາ
1	ບັນຊີອາກອນ	ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດລາວ.	2014-2015
2	ການບັນຊີທົ່ວໄປ (ອາຈານສອນປະລິນຍາໂທ)	ວິທະຍາໄລຄອມເຊັນເຕີ.	2009-2012
3	ບັນຊີທົ່ວໄປລົງເລິກ	ທີ່ປຶກສາບັນຊີລາວ Lao CPA	1998-2012
4	ບັນຊີທົ່ວໄປລົງເລິກ, ການບັນຊີວິໄຈ, ຄວາມສຳນຶກເບື້ອງຕົ້ນກ່ຽວກັບການຄຸ້ມຄອງການເງິນ ແລະ ຄວາມສຳນຶກຕົ້ນຕໍດ້ານການກວດສອບ (ອາຈານສອນປະລິນຍາຕີ ແລະ ຊັ້ນສູງ)	ວິທະຍາໄລເຕັກນິກປາກປ່າສັກ	2009-2011

<u>ເອກະສານຄັດຕິດ 5</u>

ໃບມອບສັນທະ

ຂຽນທີ.....
ວັນທີ.....ເດືອນ.....ປີ.....

(1) ຂ້າພະເຈົ້າ.....ສັນຊາດ..... ວັນທີ ເດືອນ ແລະ ປີເກີດ.....
ບັດປະຈຳຕົວເລກທີ.....ຢູ່ເຮືອນ ເລກທີ.....ຖະໜົນ.....
ບ້ານ.....ເມືອງ..... ແຂວງ.....

(2) ເປັນຜູ້ຖືຮຸ້ນຂອງ ບໍລິສັດ ປິໂຕຣເທຣດດິ້ງ ລາວ ມະຫາຊົນ ໂດຍຖືຮຸ້ນສາມັນຈຳນວນລວມທັງໝົດ.....ຮຸ້ນ ເຊິ່ງເທົ່າກັບຈຳນວນທີ່ຈະລົງຄະແນນສຽງໄດ້.

(3) ຂໍມອບໝາຍໃຫ້ (ກະລຸນາໃສ່ເຄື່ອງໝາຍ ✓ ລົງໃນຊ່ອງຜູ້ຮັບມອບສິດພຽງທ່ານໃດທ່ານໜຶ່ງ)

☐ (1) ທ່ານ/ທ່ານ ນາງ.....ອາຍຸ.....ປີ
ບັດປະຈຳຕົວເລກທີ .....ຢູ່ເຮືອນ ເລກທີ..... ຖະໜົນ.....
ບ້ານ.....ເມືອງ..... ແຂວງ..... ຫຼື

☐ (2) ທ່ານ ນາງ ດາລີ ພົນເສນາ ອາຍຸ 65 ປີ, ບ້ານ ໂພນຄຳ, ເມືອງ ໄຊເສດຖາ, ແຂວງ ນະຄອນຫຼວງວຽງຈັນ ຫຼື

☐ (3) ທ່ານ ໜູພັນ ມະຫາວົງ ອາຍຸ 70 ປີ,ບ້ານ ໂນນຄໍ້ໃຕ້ , ເມືອງ ໄຊເສດຖາ , ແຂວງ ນະຄອນຫຼວງວຽງຈັນ ຫຼື

☐ (4) ທ່ານ ໂພໄຊ ຈັນທະວົງສາ ອາຍຸ 49 ປີ, ບ້ານ ໜອງທາເໜືອ, ເມືອງ ຈັນທະບູລີ ແຂວງ ນະຄອນຫຼວງວຽງຈັນ

ຄົນໃດຄົນໜຶ່ງພຽງຄົນດຽວ ເປັນຜູ້ຕາງໜ້າຂອງຂ້າພະເຈົ້າ ເພື່ອເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງແທນຂ້າພະເຈົ້າໃນ ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019 ໃນວັນທີ 29 ເມສາ 2020 ເວລາ 09:30 ໂມງ, ທີ່ຫ້ອງປະຊຸມຊັ້ນ 8 ອາຄານຕະຫຼາດ ຫຼັກຊັບລາວ, ບ້ານໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ ຫຼື ມື້ໄດ້ເລື່ອນໄປໃນວັນ, ເວລາ ແລະ ສະຖານທີ່ອື່ນດ້ວຍ.

(4) ຂ້າພະເຈົ້າຂໍມອບໝາຍໃຫ້ຜູ້ຕາງໜ້າລົງຄະແນນສຽງແທນຂ້າພະເຈົ້າໃນກອງປະຊຸມ ດັ່ງນີ້:

- ☐ ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງມະຕິແທນຂ້າພະເຈົ້າໄດ້ທຸກປະການຕາມທີ່ເຫັນສົມຄວນ;
- ☐ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າ ແລະ ມີສິດຈະພິຈາລະນາ ແລະ ລົງມະຕິ ແທນຂ້າພະເຈົ້າໃນບາງວາລະ;
- ☐ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າ.

ວາລະທີ 01: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2018

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 02: ພິຈາລະນາ ແລະ ຮັບຮອງ ບົດລາຍງານຜົນການດຳເນີນທຸລະກິດ ປະຈຳປີ 2019 ແລະ ເອກະສານລາຍງານ ການເງິນທີ່ຜ່ານການກວດສອບຂອງຜູ້ກວດສອບພາຍນອກ ປະຈຳປີ 2019

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 03: ພິຈາລະນາບໍ່ໃຫ້ມີການປັນຜົນ ຈາກຜົນການດຳເນີນທຸລະກິດປະຈຳປີ 2019

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 04: ພິຈາລະນາ ແລະ ຮັບຮອງເອົາ ແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2020

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 05: ພິຈາລະນາ ແລະ ຮັບຮອງ ການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກຄື ບໍລິສັດ Price Waterhouse Coopers (Lao) Sole Co., Ltd. (“PWC”) ພ້ອມທັງກຳນົດຄ່າຈ້າງ ປະຈຳປີ 2020 ຢູ່ລະຫວ່າງ 34,000-37,000 ໂດລາສະຫາລັດ

☐ ເຫັນດີ ☐ ບໍ່ເຫັນດີ

(5) ການລົງຄະແນນສຽງຂອງຜູ້ຕາງໜ້າ ໃນວາລະການປະຊຸມໃດທີ່ບໍ່ເປັນໄປຕາມທີ່ລະບຸໄວ້ໃນໃບມອບສັນທະສະບັບນີ້ໃຫ້ຖືວ່າການລົງຄະແນນສຽງນັ້ນ ບໍ່ຖືກຕ້ອງ ແລະ ບໍ່ແມ່ນການລົງຄະແນນສຽງຂອງຂ້າພະເຈົ້າໃນຖານະຜູ້ຖືຮຸ້ນ;

(6) ໃນກໍລະນີທີ່ຂ້າພະເຈົ້າບໍ່ໄດ້ລະບຸຄວາມຕ້ອງການໃນການລົງຄະແນນສຽງ ໃນວາລະໃດໄວ້ ຫຼື ລະບຸບໍ່ຈະແຈ້ງໃຫ້ຖືວ່າເຫັນດີ;

(7) ການກະທຳໃດ ທີ່ຜູ້ຕາງໜ້າໄດ້ກະທຳໄປໃນກອງປະຊຸມ, ເວັ້ນແຕ່ກໍລະນີທີ່ຜູ້ຕາງໜ້າບໍ່ລົງຄະແນນສຽງຕາມທີ່ຂ້າພະເຈົ້າລະບຸໃນໃບມອບສັນທະສະບັບນີ້, ໃຫ້ຖືວ່າຂ້າພະເຈົ້າໄດ້ກະທຳດວ້ຍຕົນເອງທຸກຢ່າງ.

ລົງລາຍເຊັນຜູ້ຖືຮຸ້ນທີ່ມອບໝາຍ

(_____)

ລົງລາຍເຊັນຜູ້ຕາງໜ້າ

(_____)

<u>ໝາຍເຫດ</u>

1. ຜູ້ຖືຮຸ້ນທີ່ມອບໝາຍຈະຕ້ອງມອບໝາຍໃຫ້ຜູ້ຕາງໜ້າພຽງທ່ານດຽວເປັນຜູ້ເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງ ລວມທັງບໍ່ສາມາດແບ່ງແຍກຈຳນວນຮຸ້ນໃຫ້ຜູ້ຕາງໜ້າຫຼາຍທ່ານເພື່ອແຍກການລົງຄະແນນສຽງໄດ້; ແລະ
2. ກົດໝາຍວ່າດ້ວຍທະບຽນສານ(ສະບັບປັບປຸງ) ເລກທີ 11/ສພຊ, ລົງວັນທີ 26 ພະຈິກ 2009 ກຳນົດວ່າ ເພື່ອເປັນການຮັບປະກັນຄວາມຜູກພັນຂອງຜູ້ມອບໝາຍ ແລະ ຜູ້ຕາງໜ້າທາງດ້ານກົດໝາຍ, ດັ່ງນັ້ນ ໃບມອບສັນທະສະບັບນີ້ຈະຕ້ອງໄດ້ນຳໄປຈົດທະບຽນສານນຳສຳນັກງານທະບຽນສານ, ກະຊວງຍຸຕິທຳ ໃນນີ້ບໍລິສັດຈະບໍ່ຮັບຜິດຊອບໃດໆ ໃນກໍລະນີທີ່ໃບມອບສັນທະ ສະບັບນີ້ທີ່ຍື່ນຕໍ່ບໍລິສັດບໍ່ໄດ້ຈົດທະບຽນສານ.

<u>ເອກະສານຄັດຕິດ 6</u>

ຄຳແນະນຳກ່ຽວກັບເອກະສານ ແລະ ຫຼັກຖານທີ່ຕ້ອງນຳມາສະເໜີເພື່ອເຂົ້າຮ່ວມປະຊຸມ
Instruction about the document and evidence to be present prior to attending the meeting

ເພື່ອຄວາມສະດວກໃນການລົງທະບຽນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019 ຂອງບໍລິສັດ ປິໂຕຣລ້ຽມ ເທຣດດິ້ງ ລາວ ມະຫາຊົນ, ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ຈະເຂົ້າມາຮ່ວມກອງປະຊຸມ. ກະລຸນານຳໜັງສືເຊີນປະຊຸມ, ໃບເຂົ້າຮ່ວມກອງ ປະຊຸມທີ່ອອກໃຫ້ໂດຍຕະຫຼາດຫຼັກຊັບລາວ ແລະ ໃບມອບສັນທະ (ສຳລັບຜູ້ຕາງໜ້າ) ມາພ້ອມເອກະສານ ທີ່ສາມາດນຳໃຊ້ຢັ້ງຢືນ ຕົນເອງຕາມແຕ່ລະກໍລະນີດັ່ງນີ້:

For convenience in the registration process to attend the Annual General Shareholder's Meeting for the year 2019 of Petroleum Trading Lao Public Company, The shareholders or the proxies who will attend the meeting are required to bring the invitation to the meeting, the Letter for attending the meeting issued by the Lao Securities Exchange and the proxy (applicable for the proxy only) together with the documents for proof of identity as indicated for each circumstance below:

1. ຜູ້ເຂົ້າຮ່ວມທີ່ເປັນບຸກຄົນ / attendees who are natural persons.
   ໃຫ້ນຳເອົາເອກະສານໃດໜຶ່ງຂອງຕົນເອງດັ່ງຕໍ່ໄປນີ້ມາສະແດງເວລາລົງທະບຽນ. Shall present one of the following documents of their own at the time of registration.
   1.1 ບັດປະຈຳຕົວ / Identification Card.
   1.2 ສຳມະໂນຄົວ / Family Book.
   1.3 ໜັງສືຜ່ານແດນ (ສຳລັບນັກລົງທຶນຕ່າງປະເທດ)/ Passport (For the foreign investors).
2. ຜູ້ເຂົ້າຮ່ວມທີ່ເປັນນິຕິບຸກຄົນ / attendees who are legal person.
   ໃຫ້ນຳເອົາເອກະສານໃດໜຶ່ງທີ່ກຳນົດໄວ້ໃນຂໍ້ 1 ຂ້າງເທິງພ້ອມກັບເອກະສານໃດໜຶ່ງດັ່ງຕໍ່ໄປນີ້ມາສະແດງເວລາ ລົງທະບຽນ. Shall present one of the documents as given in 1. Above plus one of the following documents at the time of registration.
   2.1 ໃບອະນຸຍາດນັກລົງທຶນ / Investment license.
   2.2 ໃບທະບຽນວິສາຫະກິດ / Certificate of Enterprise Registration (Affidavit).
   2.3 ໃບທະບຽນອາກອນສະບັບລ້າສຸດ / Most recent Tax Certificate.

   ສຳລັບຜູ້ເຂົ້າຮ່ວມທີ່ບໍ່ແມ່ນຜູ້ອຳນວຍການຕ້ອງໄດ້ນຳເອົາໃບມອບສັນທະຈາກຜູ້ອຳນວຍການທີ່ມີສິດອຳນາດມາເພີ່ມ ຕື່ ມອີ ກ. For attendee who is not the authorized director shall have the proxy as attached hereto signed by the authorized director.

ເອກະສານ ແລະ ຫຼັກຖານທີ່ຕ້ອງນຳມາສະເໜີໂຕເພື່ອເຂົ້າຮ່ວມກອງປະຊຸມຊຶ່ງເປັນພາສາຕ່າງປະເທດ ຕ້ອງແປເປັນພາສາ ລາວ ໂດຍມີການເຊັນຢັ້ງຢືນຄວາມຖືກຕ້ອງໃນການແປຈາກບໍລິສັດແປພາສາທີ່ໜ້າເຊື່ອຖືໄດ້ ສຳລັບພາສາຕ່າງປະເທດແມ່ນ ອະນຸຍາດໃຫ້ສຳລັບພາສາອັງກິດເທົ່ານັ້ນ. ບໍລິສັດ ປິໂຕຣເທຣດດິ້ງ ລາວ ມະຫາຊົນ ມີສິດປະຕິເສດເອກະສານອ້າງອີງໃດໆທີ່ບໍ່ເປັນ ໄປຕາມການກຳນົດນີ້.

All documents and evidence in the foreign language which are required to present prior to attending the meeting must be translated into Lao language and the translation shall be certified an acceptable translation company. The foreign language is permitted only for English. PTL has the right to reject any documents contradicting this provision.

<u>ເອກະສານຄັດຕິດ 7</u>

ແຜນທີ່ສະຖານທີ່ຈັດປະຊຸມ

ອາຄານຕະຫຼາດຫຼັກຊັບລາວ (ຕລຊລ), ຊັ້ນ 4 ບ້ານໂພນທັນເໜືອ, ຖະໜົນ T4, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ. ສ.ປ.ປ ລາວ
ຕູ ປ.ນ : 3373

ໂທ : +856 - 21 - 454361-4
ແຟັກ : +856 - 21 - 454360

